vhs
DVV International

ການ ຮ່ວມມື
ເຢຍລະມັນ
DEUTSCHE ZUSAMMENARBEIT

Education for Everyone. Worldwide.
Lifelong.

# ຈົດໝາຍຂ່າວ

## ການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສານອກໂຮງຮຽນ ໃນສປປ ລາວ ແລະ ອາຊີຕາເວັນອອກສຽງໃຕ້



No. 4-2017
ສະບັບພິເສດ:
ການຮຽນຮູ້ຕະຫຼອດຊີວິດ

ສະໜັບສະໜູນໂດຍ
Federal Ministry for Economic Cooperation and Development

vhs
DVV International

Education for Everyone. Worldwide.
Lifelong.



# ກ້າວໄປສູ່ສັງຄົມການຮຽນຮູ້ ຕະຫຼອດຊີວິດໃນ ສປປ ລາວ

ບັນດາຜູ້ຊ່ຽວຊານຫຼາຍທ່ານໄດ້ຍອມຮັບວ່າ ການຮຽນຮູ້ຕະຫຼອດຊີວິດແມ່ນແນວຄວາມຄິດທີ່ດີທີ່ສຸດສໍາລັບການສຶກສາໃນສັດຕະວັດທີ 21. ເຊິ່ງໄດ້ຖືກກ່າວເຖິງໃນຂອບການປະຕິບັດງານສາກົນ ເຊັ່ນ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຊິ່ງໄດ້ຖືກກ່າວເຖິງໃນໜ່ວຍງານລະດັບພາກພື້ນເຊັ່ນ: ອາຊຽນ ຫຼື ຊີເມວ ແລະ ມັນເປັນຫົວໃຈສໍາຄັນຂອງຂອງແຜນພັດທະນາການສຶກສາ ແລະ ກິລາ ຂອງ ສປປ ລາວ.

ເຖິງຢ່າງໃດກໍຕາມ, ໃນຄວາມເປັນຈິງແລ້ວແນວຄວາມຄິດນີ້ແມ່ນການຕົກລົງເຫັນດີຂອງ ບັນດາຜູ້ຊ່ຽວຊານ ແລະ ຜູ້ທີ່ມີອໍານາດໃນການຕັດສິນໃຈແຕ່ກໍບໍ່ໝາຍຄວາມວ່າແນວຄວາມຄິດດັ່ງກ່າວຈະເປັນທີ່ເຂົ້າໃຈ ແລະ ຍອມຮັບສໍາລັບປະຊາຊົນ. ແລະ ກໍບໍ່ໝາຍຄວາມວ່າທັງໝົດນີ້ຈະສາມາດນໍາເປັນແນວທາງໃນການຈັດຕັ້ງປະຕິບັດໄດ້ທັງໝົດ.

**"ການຮຽນຮູ້ຕະຫຼອດຊີວິດແມ່ນໄດ້ກ່ຽວພັນກັນຢ່າງໃກ້ຊິດກັບຄວາມມ່ວນຊື່ນ. ຖ້າການຮຽນໝາຍເຖິງຄວາມມ່ວນຊື່ນ ທ່ານຈະມີຄວາມສຸກທີ່ຈະໄດ້ຮຽນຮູ້ ຕະຫຼອດຊີວິດ"**

*-ອູ ເວິ ກາກເຕິນສະແລເກິ.*

ບາງທີ ອາດບໍ່ມີໃຜຮູ້ຫຼາຍໄປກວ່າພວກເຮົາ ຜູ້ທີ່ເຮັດວຽກກ່ຽວກັບການສຶກສານອກໂຮງຮຽນ(ກສນ). ໃນຂະນະທີ່ພວກເຮົາກໍາລັງຜະເຊີນກັບຄວາມຈິງທີ່ວ່າການຮຽນຮູ້ຕະຫຼອດຊີວິດແມ່ນສິ່ງໃໝ່ໃນວຽກງານ ກສນ ແລະ ເປັນສິ່ງໃໝ່ສໍາລັບການສຶກສາທີ່ບໍ່ຢູ່ໃນລະບົບສາມັນ. ໃນຄວາມເປັນຈິງແມ່ນມັນແຕກຕ່າງກັນຢ່າງຈະແຈ້ງ ແລະ ນັ້ນແມ່ນເຫດຜົນທີ່ພວກເຮົາຕັດສິນໃຈນໍາສະເໜີກ່ຽວກັບແນວຄວາມຄິດ ແລະ ບົດຮຽນການຈັດຕັ້ງປະຕິບັດທີ່ດີຂອງການຮຽນຮູ້ຕະຫຼອດຊີວິດ. ສໍາລັບຂ້າພະເຈົ້າແລ້ວ ສິ່ງສໍາຄັນແມ່ນເພື່ອໃຫ້ມີຄວາມເຂົ້າໃຈໃນທຸກຂະແໜງການຂອງລະບົບການສຶກສາຄວນຈະປະກອບສ່ວນເພື່ອໃຫ້ເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ໃຫຍ່ກາຍເປັນນັກຮຽນຮູ້ຕະຫຼອດຊີວິດ.

- ການສຶກສາກ່ອນໄວຮຽນ ແລະ ປະຖົມສຶກສາຄວນສອນໃຫ້ເດັກມີຄວາມມ່ວນຊື່ນໃນການຮຽນຮູ້ ເນື່ອງຈາກວ່າ ຖ້າບໍ່ມີທັດສະນະທີ່ດີຕໍ່ການສຶກສາແລ້ວມັນກໍຈະເປັນການຍາກທີ່ຈະມີແຮງຈູງໃຈໃນການຮຽນ.
- ມັດທະຍົມສຶກສາຄວນຊ່ວຍໃຫ້ນັກຮຽນສາມາດຮຽນຮູ້ໄດ້ດ້ວຍຕົນເອງ ເພາະວ່າມັນຈະເປັນການຮຽນເພື່ອຊີວິດເຂົາເຈົ້າເອງສໍາລັບການຮຽນຮູ້ຕໍ່ເນື່ອງ.
- ທຸກຂະແໜງການ ລວມທັງ ກສນ ຄວນເຮັດໃຫ້ມີການປ່ຽນແປງລະຫວ່າງຂະແໜງການ ເນື່ອງຈາກວ່າຊາວໜຸ່ມ ແລະ ຜູ້ໃຫຍ່ ຄວນໄດ້ຮັບໂອກາດໃນການຍົກລະດັບເຊັ່ນ ຈາກອາຊີວະສຶກສາກ້າວສູ່ການສຶກສາຊັ້ນສູງ ຫຼື ການສຶກສາທຽບເທົ່າ.

ມັນຍັງເປັນຫົນທາງອີກຍາວໄກໃນການສ້າງສັງຄົມແຫ່ງການຮຽນຮູ້ຕະຫຼອດຊີວິດ. ແຕ່ກໍເປັນການຊຸກຍູ້ໃຫ້ລັດຖະບານ ແຫ່ງ ສປປ ລາວ ຕັດສິນໃຈທີ່ຈະນໍາສະເໜີກ່ຽວດໍາລັດວ່າດ້ວຍ ນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ເຊິ່ງຈະຊ່ວຍໃຫ້ພາກສ່ວນທີ່ກ່ຽວຂ້ອງສາມາດກ້າວໄປທາງໜ້າ ແລະ ກໍານົດຮູບແບບຂອງລະບົບການສຶກສາໂດຍອີງຕາມແນວທາງການຮຽນຮູ້ຕະຫຼອດຊີວິດ. ດີວີວີ ອິນເຕີເນເຊີນແນວ ມີຄວາມປິຕິຍິນດີຫຼາຍທີ່ໄດ້ສະໜັບສະໜູນໃນຂະບວນການພັດທະນາດໍາລັດດັ່ງກ່າວນີ້.

ຈົດໝາຍຂ່າວສະບັບນີ້ແມ່ນສະບັບສຸດທ້າຍຂອງປີ 2017 ຂ້າພະເຈົ້າຢາກໃຊ້ໂອກາດນີ້ໃນການສະແດງຄວາມຮູ້ບຸນຄຸນມາຍັງຄູ່ຮ່ວມພັດທະນາ ແລະ ໝູ່ເພື່ອນທຸກທ່ານ ທີ່ໄດ້ຮ່ວມກັນສິ່ງເສີມວຽກງານການສຶກສານອກໂຮງຮຽນໃນ ສປປ ລາວ. ຂ້າພະເຈົ້າບໍ່ເຄີຍຮູ້ສຶກວ່າມັນຫຼາຍເກີນໄປ ແຕ່ທຸກສິ່ງທີ່ເຮົາເຮັດແມ່ນດ້ວຍຄວາມຮັກ ແລະ ການອຸທິດຕົນເພື່ອປັງປຸງຄຸນນະພາບຊີວິດຄົນຈໍານວນຫຼາຍ ໂດຍຜ່ານການສຶກສາ!

ຂ້າພະເຈົ້າຫວັງວ່າຈະໄດ້ສະຫຼອງຄວາມສໍາເລັດໃນປີ 2018.

ດ້ວຍຄວາມຮັກແພງ
*ອູເວິ ກາກເຕິນສະແລເກິ*
ຜູ້ອໍານວຍການປະຈໍາພາກພື້ນ





# ຕ່ອງໂສ້ການຮຽນຮູ້ຕະຫຼອດຊີວິດ

ການຮຽນຮູ້ຕະຫຼອດຊີວິດ ແມ່ນແນວຄວາມຄິດໃນການສ້າງການສຶກສາໃນສັດຕະວັດທີ 21. ເຊິ່ງມັນໄດ້ຮັບການຮັບຮອງເອົາໃນ ເປົ້າໝາຍການພັດທະນາແບບຍືນຍົງ ແລະ ໃນວາລະການສຶກສາ ປີ 2030.

ການຮຽນຮູ້ຕະຫຼອດຊີວິດແມ່ນຫຍັງ? ຕ່ອງໂສ້ການຮຽນຮູ້ຕະຫຼອດຊີວິດ ຕ້ອງການສະໜັບສະໜູນພວກເຮົາໃນການນຳສະເໜີແນວຄວາມຄິດຂອງບັນດາຜູ້ເຂົ້າຮ່ວມ, ຄູ່ຮ່ວມພັດທະນາ ແລະ ຜູ້ວາງນະໂຍບາຍ. ເຊິ່ງໃນຕ່ອງໂສ້ນີ້ປະກອບມີ 40 ທ່ອນໜ່ອຍ ເຊິ່ງແຕ່ລະທ່ອນໜ່ອຍແມ່ນໝາຍເຖິງ 2 ປີໃນຊີວິດເຮົາ:

- 4 ປີ ສໍາລັບການສຶກສາກ່ອນໄວຮຽນ
- 4 ປີ ສໍາລັບການສຶກສາຂັ້ນພື້ນຖານ
- 6 ປີ ສໍາລັບການສຶກສາຂັ້ນມັດທະຍົມ
- 4 ປີສໍາລັບການສຶກສາວິຊາຊີບ ຫຼື ການສຶກສາຂັ້ນສູງ
- 60 ປີ ສໍາລັບການເຮັດວຽກ, ບໍານານ ແລະ ການສຶກສານອກໂຮງຮຽນ

ໃນຮູບແບບທີ່ເຂົ້າໃຈງ່າຍ, ຕ່ອງໂສ້ນີ້ໄດ້ສະແດງໃຫ້ເຫັນແນວຄວາມຄິດຫຼັກ 2 ຢ່າງຄື:

- ການຮຽນຮູ້ຕະຫຼອດຊີວິດ ເປັນຂະບວນການທີ່ດໍາເນີນໄປຕະຫຼອດຊີວິດ. ການເດີນທາງຂອງການສຶກສາເປັນການເຊື່ອມໂຍງ ມັນບໍ່ສາມາດແຍກອອກຈາກກັນໄດ້. ລັດຖະບານ, ສັງຄົມ ແລະ ຄູ່ຮ່ວມພັດທະນາຄວນສະໜັບສະໜູນວາລະການສຶກສາທັງໝົດ.
- ເວລາສ່ວນຫຼາຍໃນຊີວິດ ການສຶກສານອກໂຮງຮຽນແມ່ນມີໜ້າທີ່ສະໜອງການບໍລິການດ້ານການສຶກສາ. ນີ້ຄວນນໍາໄປສູ່ການເພີ່ມງົບປະມານສໍາລັບການສຶກສາຂອງຊາວໜຸ່ມ ແລະ ຜູ້ໃຫຍ່.

*ຕ່ອງໂສ້ການຮຽນຮູ້ຕະຫຼອດຊີວິດນີ້ ພັດທະນາ ໂດຍ ສູນການຮຽນຮູ້ຊຸມຊົນ ໃນເມືອງອາເຄ່ນ, ປະເທດເຢຍລະມັນ (www.vhs-aachen.de), ເຊິ່ງໄດ້ອະນຸຍາດໃຫ້ເຜີຍແຜ່ແນວຄວາມຄິດນີ້.*



ທ່ານ ລີຕູ້ ບົວປາວ ໃນກອງປະຊຸມ ນະໂຍບາຍ ການຮຽນຮູ້ຕະຫຼອດຊີວິດ

# ການຮຽນຮູ້ຕະຫຼອດຊີວິດໃນ ສປປ ລາວ

*ພະນະທ່ານ ລີຕູ້ ບົວປາວ*
ອະດີດລັດຖະມົນຕີຊ່ວຍກະຊວງສຶກສາທິການ ແລະ ກິລາ

ການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນມີຄວາມໝາຍ ແລະ ຄວາມສຳຄັນທີ່ສຸດໃນຍຸກໂລກາພິວັດ, ຍຸກເສດຖະກິດພູມປັນຍາ, ຍຸກເຊື່ອມໂຍງເຂົ້າກັນທາງດ້ານການເມືອງ, ເສດຖະກິດ-ສັງຄົມ-ວັດທະນະທຳ, ວິທະຍາສາດເຕັກນິກ-ເຕັກໂນໂລຢີຂໍ້ມູນຂ່າວສານ ແລະ ການສື່ສານບໍ່ມີພົມແດນ, ດິນຟ້າອາກາດ ແລະ ສິ່ງແວດລ້ອມ ມີການປ່ຽນແປງຢ່າງບໍ່ຢຸດຢັ້ງ, ປະຊາກອນຂອງຊາດ ແລະ ຂອງໂລກເພີ່ມຂຶ້ນຢ່າງໄວວາ, ຄວາມທຸກຍາກ ແລະ ພະຍາດໂລຄາ ຍັງເປັນໄພຂົ່ມຂູ່ຊີວິດການເປັນຢູ່ຂອງປະຊາຊົນຜູ້ດ້ອຍໂອກາດ, ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ສະພາບການ ປ່ຽນແປງຢ່າງໄວວາດັ່ງກ່າວ, ອົງການສະຫະປະຊາຊາດໄດ້ກຳນົດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ 8 ເປົ້າໝາຍໃນປີ 2000 ແລະ ເປົ້າໝາຍການພັດທະນາແບບຍືນຍົງ 17 ເປົ້າໝາຍ ໃນປີ 2015 ເພື່ອເປັນບ່ອນອີງໃຫ້ທຸກປະເທດສະມາຊິກໂດຍສະເພາະບັນດາປະເທດດ້ອຍພັດທະນາໃນນັ້ນມີທັງ ສປປ ລາວ ເຮົາສູ້ຊົນປະຕິບັດໃຫ້ບັນລຸເພື່ອມີເງື່ອນໄຂຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ, ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ. ເພື່ອບັນລຸເປົ້າໝາຍດັ່ງກ່າວ, ກອງປະຊຸມໃຫຍ່ຄັ້ງທີ 10 ຂອງພັກໄດ້ມີມະຕິຖືເອົາ: ການພັດທະນາຊັບພະຍາກອນມະນຸດເປັນປັດໄຈຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່, ເປັນການສ້າງກຳລັງແຮງໃຫ້ບັນດາພາກສ່ວນເສດຖະກິດຂອງລັດ ແລະ ເອກະຊົນມີການຂະຫຍາຍຕົວໄປຕາມທິດພັດທະນາແບບຍືນຍົງ, ເປັນການເສີມຂະຫຍາຍສິດເປັນເຈົ້າຂອງ ປະຊາຊົນເພື່ອສ້າງຄວາມຮັ່ງມີຜາສຸກແກ່ຄອບຄົວ ແລະ ປະເທດຊາດ.

ລັດຖະທຳມະນູນຂອງສປປລາວໄດ້ກຳນົດວ່າ ການສຶກສາແມ່ນສິດທິພື້ນຖານຂອງພົນລະເມືອງລາວ. ກົດໝາຍການສຶກສາສະບັບປັບປຸງປີ 2016 ໄດ້ກຳນົດໃນມາດຕາ 26 ວ່າ: ການຮຽນຮູ້ຕະຫຼອດຊີວິດແມ່ນການປະສົມປະສານລະຫວ່າງການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ຕາມອັດທະຍາໄສເພື່ອສົ່ງເສີມທຸກຄົນທັງຍິງ ແລະ ຊາຍໃຫ້ໄດ້ຮັບການຮຽນຮູ້ຕະຫຼອດຊີວິດເພື່ອສ້າງສັງຄົມພູມປັນຍາຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາ. ອົງການອຸຍແນສໂກເຊິ່ງເປັນເສນາທິການຂອງອົງການສະຫະປະຊາຊາດທາງດ້ານການສຶກສາ, ວິທະຍາສາດ ແລະ ວັດທະນະທຳໄດ້ສ້າງຕັ້ງສະຖາບັນການຮຽນຮູ້ຕະຫຼອດຊີວິດຂຶ້ນໃນປີ 1952 ເພື່ອເປັນເສນາທິການໃຫ້ອົງການອຸຍແນສໂກໃນການສ້າງແຜນພັດທະນາການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດນັບທັງການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຂອງບັນດາປະເທດສະມາຊິກໃນແຕ່ລະໄລຍະ. ປີ 1990 ອົງການອຸຍແນສໂກໄດ້ຈັດກອງປະຊຸມສຶກສາໂລກຂຶ້ນທີ່ຈອມທຽນປະເທດໄທ, ໄດ້ເປັນເອກະພາບກັນວາງແຜນງານການການສຶກສາເພື່ອທຸກຄົນອອກໃຫ້ລັດຖະບານຂອງທຸກປະເທດສະມາຊິກສ້າງເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ພົນລະເມືອງຂອງຕົນ ໄດ້ຮັບການສຶກສາຊັ້ນປະຖົມພາກບັງຄັບຢ່າງທົ່ວເຖິງ ແລະ ມີຄຸນນະພາບ. ປີ 2015 ອຸຍແນສໂກໄດ້ຈັດກອງປະຊຸມສຶກສາໂລກຂຶ້ນອີກທີ່ນະຄອນຫຼວງເຊອູນ, ສາທາລະນະລັດເກົາຫຼີ, ໄດ້ເປັນເອກະສັນກັນຮັບຮອງເອົາເປົ້າໝາຍການພັດທະນາແບບຍືນຍົງ 4 ວ່າດ້ວຍຄຸນນະພາບຂອງການສຶກສາ ໃນນັ້ນໄດ້ມີຂໍ້ເນັ້ນໃຫ້ທຸກປະເທດສະມາຊິກມີພັນທະໃນການຊຸກຍູ້ສົ່ງເສີມ ແລະ ສ້າງໂອກາດການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນໃນທຸກຊັ້ນທຸກສາຍ ແລະ ທຸກລະດັບ ນັບທັງອາຊີວະສຶກສາ ແລະ ການຝຶກອົບຮົມ, ການສຶກສາຊັ້ນສູງ, ການຄົ້ນຄວ້າ, ການຄ້ຳປະກັນດ້ານຄຸນນະພາບ, ການຈັດການຮຽນການສອນແບບຍືດຍຸ່ນທີ່ສາມາດປັບປ່ຽນໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ຂອງຜູ້ຮຽນ. ອົງການຊີມຽວເຊິ່ງແມ່ນສະພາການສຶກສາ ຂອງບັນດາລັດຖະມົນຕີກະຊວງສຶກສາທິການຂອງບັນດາປະເທດຊີມຽວໄດ້ສ້າງຕັ້ງສູນຮຽນຮູ້ຕະຫຼອດຊີວິດຂຶ້ນເພື່ອເປັນເສນາທິການດ້ານການສຶກສານອກໂຮງຮຽນ ແລະ ການສຶກສາຕະຫຼອດຊີວິດທັງເປັນສູນຝຶກອົບຮົມພະນັກງານທີ່ຮັບຜິດຊອບວຽກງານການຮຽນຮູ້ຕະຫຼອດຊີວິດຂອງບັນດາປະເທດສະມາຊິກ. ນອກຈາກນັ້ນ ບັນດາປະເທດສະມາຊິກນັບທັງ ສປປ ລາວເຮົາ ກໍໄດ້ສ້າງຕັ້ງຫ້ອງການ, ກົມ, ສະຖາບັນ ແລະ ສູນຢູ່ຂັ້ນກະຊວງ, ຂະແໜງການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດຢູ່ຂັ້ນແຂວງ, ເມືອງ ແລະ ສູນການຮຽນຮູ້ຕະຫຼອດຊີວິດຢູ່ຂັ້ນບ້ານຕາມເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການ ເຊັ່ນ (1) ສະຫະພັນເຢຍລະມັນກໍໄດ້ສ້າງຕັ້ງຫ້ອງການຮ່ວມມືນາໆຊາດເພື່ອການສຶກສາຜູ້ໃຫຍ່ເຢຍລະມັນ (DVV International) ເພື່ອເປັນເສນາທິການດ້ານການສຶກສານອກໂຮງຮຽນ ແລະ ການຮຽນຮູ້ຕະຫຼອດຊີວິດເພື່ອຈັດຕັ້ງການຮຽນ ແລະ ການຝຶກອົບຮົມວິຊາຊີບໃຫ້ຊາວຜູ້ອອກແຮງງານພາຍໃນປະເທດ



## 4 ການສຶກສາທີ່ມີຄຸນນະພາບ:

ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ ແລະ ສົ່ງເສີມ ກາລະໂອກາດ ໃນການຮຽນຮູ້ຕະຫຼອດຊີວິດ ສໍາລັບໝົດທຸກຄົນ

ຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ ແລະ ໃຫ້ການຮ່ວມມື ຊ່ວຍເຫຼືອບັນດາປະເທດດ້ອຍພັດທະນາໃນຫຼາຍພາກພື້ນ, ສໍາລັບອາຊີ ໃຕ້ ແລະ ອາຊີຕາເວັນອອກສຽງໃຕ້ກວມເອົາທັງ ສປປ ລາວເຮົາຢູ່ນໍາ. (2) ສາທາລະນະລັດເກົາຫຼີກໍໄດ້ສ້າງຕັ້ງກົມ, ສະຖາບັນ, ເມືອງ ແລະ ສູນການຮຽນຮູ້ຕະຫຼອດຊີວິດຢູ່ຕາມແຂວງ ແລະ ສະຖາບັນການສຶກສາຕ່າງໆ ທຸກລະດັບເພື່ອຈັດຕັ້ງການສອນ-ການຮຽນຕາມຄວາມຮຽກຮ້ອງຕ້ອງການໃນແຕ່ລະໄລຍະ.



ມີຜູ້ໃຫຍ່ກືກໜັງສື 750 ລ້ານຄົນ ໃນນັ້ນ ສອງສ່ວນສາມ ແມ່ນເພດຍິງ

© UNESCO

ສໍາລັບ ສປປ ລາວ ເຮົາຊຶ່ງຍັງເປັນປະເທດດ້ອຍພັດທະນາຢາກຫຼຸດພົ້ນຈາກສະຖານະພາບຄວາມເປັນປະເທດດ້ອຍພັດທະນາ. ປະຊາຊົນລາວບັນດາເຜົ່າຫຼຸດພົ້ນຈາກຄວາມທຸກຍາກ, ລັດຖະບານໄດ້ສ້າງຕັ້ງຄະນະກໍາມາທິການພັດທະນາຊັບພະຍາກອນມະນຸດແຫ່ງຊາດຂຶ້ນໂດຍແມ່ນທ່ານລັດຖະມົນຕີກະຊວງສຶກສາທິການ ແລະກິລາ ເປັນປະທານເພື່ອເປັນເສນາທິການໃຫ້ແກ່ລັດຖະບານໃນວຽກງານພັດທະນາຊັບພະຍາກອນມະນຸດຂອງລາວໃຫ້ມີຄວາມຮູ້ຄວາມສາມາດຮອງຮັບການປະຕິບັດບັນດາຄາດໝາຍໃຫຍ່ທີ່ພັກວາງອອກນັບທັງເປົ້າໝາຍການພັດທະນາແບບຍືນຍົງໃຫ້ບັນລຸຄາດໝາຍທີ່ວາງໄວ້, ບົດຮຽນຂອງບັນດາປະເທດທີ່ມີການພັດທະນາຢ່າງໄວວາໃນຂົງເຂດອາຊີຕາເວັນອອກ ແລະ ຕາເວັນອອກສ່ຽງໃຕ້ໄດ້ຢັ້ງຢືນໃຫ້ເຫັນຢ່າງຊັດເຈນແລ້ວຕົວຢ່າງ: ສປ ຈີນ, ສ.ເກົາຫຼີ, ຫວຽດນາມ, ສິງກະໂປ, ມາເລເຊຍ... ໃຊ້ເວລາ ບໍ່ເກີນ 30 ປີ ໃນການພັດທະນາປະເທດຊາດໃຫ້ຫຼຸດພົ້ນຈາກສະຖານະພາບຄວາມເປັນປະເທດດ້ອຍພັດທະນາ. ປັດໃຈຕັດສິນກໍແມ່ນບັນດາປະເທດທີ່ກ່າວມານັ້ນໄດ້ຖືເອົາການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນເປັນພາລະກິດຂອງທົ່ວພັກ, ທົ່ວລັດ ແລະ ທົ່ວສັງຄົມ, ບໍ່ແມ່ນແຕ່ຂອງກະຊວງສຶກສາທິການ, ທຸກກະຊວງທະບວງ, ອົງການຈັດຕັ້ງມະຫາຊົນທັງພາກລັດແລະເອກະຊົນຂັ້ນສູນກາງ ແລະ ທ້ອງຖິ່ນຕະຫຼອດເຖິງອໍານາດການປົກຄອງແຂວງ, ນະຄອນຫຼວງ, ເມືອງ ແລະ ບ້ານລ້ວນແຕ່ໃຫ້ຄວາມສໍາຄັນແກ່ການຮຽນຮູ້ຕະຫຼອດຊີວິດ.



- ຫຼາຍກວ່າ 150 ປະເທດທີ່ການປະຕິຮູບລະບົບການສຶກສາໄດ້ເຮັດໃຫ້ຜົນໄດ້ຮັບໃນການຮຽນເປັນທີ່ຮັບຮູ້ ໂດຍບໍ່ຄໍານຶງເຖິງເວລາ, ສະຖານທີ່ ແລະ ວິທີການຮຽນຮູ້ທີ່ໄດ້ຮັບ
- ຫຼາຍກວ່າ 95 ປະເທດໄດ້ນໍາໃຊ້ນະໂຍບາຍ ການຮຽນຮູ້ຕະຫຼອດຊີວິດ.
- ໄອຊີທີ ໄດ້ກາຍມາເປັນໂຕແປສໍາຄັນສໍາລັບການຂະຫຍາຍ ໂອກາດໃນການຮຽນຮູ້

© UNESCO

ສະຫຼຸບແລ້ວ, ການຮຽນຮູ້ຕະຫຼອດຊີວິດເພື່ອທຸກຄົນຢ່າງມີຄຸນນະພາບ ແລະ ມາດຕະຖານແມ່ນກຸນແຈ, ແມ່ນວິທີການ ແລະ ມາດຕະການທີ່ມີປະສິດທິພາບ ແລະ ປະສິດທິຜົນສູງໃນການພັດທະນາຊັບພະຍາກອນມະນຸດໃຫ້ມີຄວາມຮູ້ຄວາມສາມາດຮອບດ້ານເພື່ອພັດທະນາປະເທດຊາດໃຫ້ຫຼຸດພົ້ນຈາກຄວາມດ້ອຍພັດທະນາ, ປະຊາຊົນຫຼຸດພົ້ນຈາກຄວາມທຸກຍາກ, ຮັ່ງມີຜາສຸກ, ມີສຸຂະພາບພະລານາໄມສົມບູນ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບເຂັ້ມແຂງ, ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນມີປະສິດທິພາບ ແລະ ປະສິດທິຜົນ.



# ກ້າວໄປສູ່ນະໂຍບາຍການຮຽນຮູ້ຕະຫຼອດຊີວິດ ໃນ ສປປ ລາວ

*ອຸ່ນເພັງ ຄຳມັງ*
ດີວີວີ ອິນເຕີເນເຊີນແນວ, ວຽງຈັນ, ສປປ ລາວ



ທ່ານ ອຸ່ນເພັງ ຄຳມັງ
ອະດີດຮອງຫົວໜ້າ
ກົມການສຶກສານອກໂຮງຮຽນ

## ແນວຄວາມຄິດ ແລະ ຄວາມເປັນມາຂອງການຮຽນຮູ້ຕະຫຼອດຊີວິດ

ວິວັດທະນາການຂອງສັງຄົມມະນຸດ ນັບແຕ່ອະດີດຮອດປະຈຸບັນ ໄດ້ຜ່ານຂະບວນການຮຽນຮູ້ທີ່ຍາວນານ ແລະ ປະດິດສ້າງສິ່ງໃໝ່ຢູ່ຕະຫຼອດເວລາ ແລະ ສັງຄົມເກີດການຮຽນຮູ້ຢູ່ສະເໝີ.

ອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ມີບົດບາດສຳຄັນໃນການສົ່ງເສີມ ແລະ ສະໜັບສະໜູນໃຫ້ນຳເອົາແນວຄວາມຄິດການສຶກສາຕະຫຼອດຊີວິດ ໄປສູ່ການປະຕິບັດໃນປະເທດຕ່າງໆ ເຊິ່ງໄດ້ຍົກຂຶ້ນໃນຄັ້ງທຳອິດຢູ່ໃນກອງປະຊຸມນາໆຊາດການສຶກສາຜູ້ໃຫຍ່ (World Education on Adult Education) ໃນປີ 1960 ທີ່ເມືອງມົງເຣອານ ປະເທດການາດາ.

ແນວຄິດຂອງການຮຽນຮູ້ຕະຫຼອດຊີວິດ ເປັນໜຶ່ງໃນຍຸດທະສາດຂອງການຮຽນຮູ້ທີ່ເກີດຂຶ້ນເມື່ອປະມານສາມສິບກວ່າປີຜ່ານມາ ພາຍໃຕ້ຄວາມພະຍາຍາມຮ່ວມກັນ OECD (Organization for Economic Cooperation and Development, UNESCO ແລະ ສະພາຢຸໂຣບ (Council of Europe). ນັບແຕ່ນັ້ນມາ ຄວາມຄິດກ່ຽວກັບການຮຽນຮູ້ຕະຫຼອດຊີວິດໄດ້ເພີ່ມຄວາມສຳຄັນຂຶ້ນ, ຕໍ່ມາອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ໄດ້ເຜີຍແຜ່ແນວຄິດ ແລະ ຂໍ້ສະເໜີແນະ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດໃຫ້ແກ່ປະເທດຕ່າງໆ ເພື່ອໃຫ້ທົ່ວໂລກນຳໄປກຳນົດແນວທາງທີ່ເໝາະສົມສຳລັບປະເທດຂອງຕົນຕໍ່ໄປ.

ໃນປີ 1972 ອົງການສະຫະປະຊາຊາດເພື່ອການສຶກສາ, ວິທະຍາສາດ ແລະ ວັດທະນະທຳ (UNESCO) ໄດ້ຈັດກອງປະຊຸມໃຫຍ່ຄັ້ງທີ່ 17 ໂດຍໄດ້ສະເໜີບົດລາຍງານຂອງຄະນະກຳມາທິການລະຫວ່າງຊາດວ່າດ້ວຍການພັດທະນາການຮຽນຮູ້ ກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ໃນຫົວຂໍ້ "ການຮຽນຮູ້ເພື່ອເຮັດເປັນ" (Learning to be) ແລະ ເອກະສານດັ່ງກ່າວໄດ້ຮັບຮູ້ຢ່າງກ້ວາງຂວາງໃນທົ່ວໂລກ ເຊິ່ງເປັນການຮຽນຮູ້ທຸກຮູບແບບ "ນັບແຕ່ມື້ເກີດຈົນເຖິງມື້ສິ້ນລົມຫາຍໃຈ" ຫຼື "ແຕ່ຢູ່ອູ່ຮອດມື້ຢູ່ໂຮງສົບ" (from cradle to grave). ການຮຽນຮູ້ຕະຫຼອດຊີວິດໄດ້ລວມເອົາການຮຽນຮູບແບບໃນໂຮງຮຽນ, ການຮຽນຮູບແບບນອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໄສໂດຍເລັ່ງໃສ່ສາມດ້ານຄື: ດ້ານຄວາມຮູ້, ທັກສະວິຊາຊີບ ແລະ ດ້ານຄວາມສາມາດເພື່ອເພີ່ມການມີວຽກເຮັດງານທຳ, ການພັດທະນາຕົວເອງ, ກິດຈະກຳດ້ານປະຊາກອນ ແລະ ລວມທັງການພັດທະນາທາງສັງຄົມ.

## ການພັດທະນານະໂຍບາຍແຫ່ງຊາດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດຢູ່ ສປປ ລາວ

ສປປ ລາວ ຊຶ່ງແມ່ນສະມາຊິກໜຶ່ງຂອງອົງການສະຫະປະຊາຊາດ ທັງເປັນສະມາຊິກຂອງອົງການອຸຍແນດສະໂກ ໄດ້ໃຫ້ຄວາມສຳຄັນ ແລະ ຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງທີ່ໄດ້ຮ່ວມໃຫ້ຄຳໝັ້ນສັນຍາ ແລະ ຈັດຕັ້ງປະຕິບັດບັນດາແຜນງານ ແລະ ໂຄງການຕ່າງໆ ເປັນຕົ້ນແມ່ນ ເປົ້າໝາຍສະຫະສະຫວັດດ້ານການພັດທະນາ ຮອດປີ 2015 (MDG), ແຜນງານການສຶກສາເພື່ອໝົດທຸກຄົນ ຮອດປີ 2015 (EFA) ແລະ ເປົ້າໝາຍການພັດທະນາແບບຍືນຍົງ ຮອດປີ 2030 (SDG). ເປົ້າໝາຍ ແລະ ຄາດໝາຍຂອງແຜນງານໃນແຕ່ລະໄລຍະກໍໄດ້ກຳນົດກ່ຽວກັບການສຶກສາ ແລະ ການຮຽນຮູ້ຕະຫຼອດຊີວິດ.

ພັກ ແລະ ລັດຖະບານ ໄດ້ໃຫ້ຄວາມສໍາຄັນແກ່ວຽກງານສຶກສາ ຊຶ່ງເປັນຂໍກຸນແຈສໍາລັບການພັດທະນາ ຊັບພະຍາກອນມະນຸດ ໂດຍໄດ້ອອກກົດໝາຍວ່າດ້ວຍການສຶກສາ ເລີ່ມແຕ່ປີ 2008 ປັບປຸງໃໝ່ ປີ 2015 ຊຶ່ງໄດ້ລະບຸກ່ຽວກັບການສຶກສາຕາມອັດທະຍາໄສ (ມາດຕາ 24) ແລະ ການຮຽນຮູ້ຕະຫຼອດຊີວິດ (ມາດຕາ 26). ການຮຽນຮູ້ຕະຫຼອດຊີວິດແມ່ນການສຶກສາທີ່ປະສົມປະສານລະຫວ່າງ ການສຶກສາໃນໂຮງຮຽນ, ນອກໂຮງຮຽນ ແລະ ການຮຽນຮູ້ຕາມອັດທະຍາໄສ ເພື່ອສົ່ງເສີມໃຫ້ທຸກຄົນທັງຍິງ ແລະ ຊາຍໄດ້ຮັບການຮຽນຮູ້ຕະຫຼອດຊີວິດ ເພື່ອສ້າງສັງຄົມພູມປັນຍາຕາມຄວາມ ຮຽກຮ້ອງຕ້ອງການຂອງການພັດທະນາ.

ອີງໃສ່ຄວາມ ຮຽກຮ້ອງຕ້ອງການຂອງວຽກງານໄລຍະໃໝ່ກະຊວງສຶກສາທິການ ແລະ ກິລາ ໄດ້ພະຍາຍາມພັດທະນານິຕິກໍາຕ່າງໆ ຊຶ່ງໃນນັ້ນໄດ້ອອກເປັນ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງສຶກສາທິການ ວ່າດ້ວຍການສຶກສານອກໂຮງຮຽນ ໃນປີ 1998 ຊຶ່ງໄດ້ເວົ້າເຖິງການສຶກສາຕາມອັດທະຍາໄສ ແລະ ການຈັດການຮຽນຮູ້ຕະຫຼອດຊີວິດ. ຈາກນັ້ນມາກະຊວງສຶກສາທິການໄດ້ມອບໝາຍໃຫ້ກົມການສຶກສານອກໂຮງຮຽນພັດທະນານະໂຍບາຍ ແລະ ຍຸດທະສາດແຫ່ງຊາດ ວ່າດ້ວຍການສຶກສານອກໂຮງຮຽນ ແຕ່ປີ 2012-2020 ຊຶ່ງໃນນັ້ນ ໄດ້ກໍານົດວຽກງານການຮຽນຮູ້ຕະຫຼອດຊີວິດເຊັ່ນກັນແຕ່ນິຕິກໍາດັ່ງກ່າວບໍ່ສາມາດສໍາເລັດສົມບູນ.

ມາຮອດປະຈຸບັນ ກະຊວງສຶກສາທິການ ແລະ ກິລາ ໄດ້ວາງແຜນພັດທະນາການສຶກສາ ແລະ ກິລາ ຄັ້ງທີ 8 ແຕ່ປີ 2016-2020 ວຽກງານການສຶກສານອກໂຮງຮຽນ ຊຶ່ງໄດ້ກໍານົດມີ 7 ຍຸດທະສາດ ແລະ 36 ວຽກຈຸດສຸມ ຫຼື ຕົວຊີ້ບອກ ຊຶ່ງໃນນັ້ນໄດ້ຍຸດທະທະສາດ 5 ແມ່ນພັດທະນາສູນການສຶກສານອກໂຮງຮຽນເປັນສູນແຫ່ງການຮຽນຮູ້ ແລະ ສົ່ງເສີມໃຫ້ທຸກຄົນໄດ້ຮຽນຮູ້ຕະຫຼອດຊີວິດ, ນອກນັ້ນຍັງມີ ຍຸດທະສາດ 6 ແມ່ນສົ່ງເສີມການສຶກສາຕາມອັດທະຍາໄສ ແລະ ການຮຽນທາງໄກ.

ໂດຍປະຕິບັດຕາມ ກົດໝາຍວ່າດ້ວຍການສຶກສາກະຊວງສຶກສາທິການ ແລະ ກິລາ ໄດ້ມອບໝາຍໃຫ້ກົມການສຶກສານອກໂຮງຮຽນ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ພັດທະນາດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ຊຶ່ງໄດ້ຮັບການຮ່ວມມື ແລະ ສະໜັບສະໜູນຈາກອົງການຈັດຕັ້ງສາກົນ ເປັນຕົ້ນແມ່ນການສະໜັບສະໜູນດ້ານທຶນຮອນຈາກອົງການ DVV International ຊຶ່ງໄດ້ເຊື້ອເຊີນຜູ້ຊ່ຽວຊານຈາກຕ່າງປະເທດມາຮ່ວມສຶກສາຄົ້ນຄວ້າ ແລະ ຂຽນຮ່າງຕົ້ນສະບັບ ຊຶ່ງໄດ້ເລີ່ມເປັນຕົນຕົວມາແຕ່ປີ 2015. ປະຈຸບັນກໍາລັງປັບປຸງຕົ້ນສະບັບ ແລະ ເມື່ອໄດ້ຮັບການຮັບຮອງຈາກລັດຖະມົນຕີກະຊວງສຶກສາທິການ ແລະ ກິລາແລ້ວກໍຈະໄດ້ສືບຕໍ່ປັບປຸງ ໃຫ້ສໍາເລັດ ແລະ ດໍາເນີນ ການຂໍອະນຸມັດຈາກລັກຖະບານຕໍ່ໄປຕາມລໍາດັບ.

ນະໂຍບາຍກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ເປັນນິຕິກໍາລະດັບຊາດໜຶ່ງທີ່ຈະໄດ້ສ້າງຂຶ້ນເປັນຄັ້ງທໍາອິດ ແລະ ເປັນປະຫວັດສາດຂອງ ສປປ ລາວ ກໍຄືສໍາລັບຂະແໜງການວຽກງານສຶກສາ ຊຶ່ງຈະນໍາເອົາ ຜົນປະໂຫຍດມາໃຫ້ປະຊາຊົນບັນດາເຜົ່າໄດ້ມີໂອກາດ ແລະ ເຂົ້າເຖິງການສຶກສາກໍຄືໄດ້ຮຽນຮູ້ຕາມຄວາມຕ້ອງການ ໃນການດໍາລົງຊີວິດ ແລະ ການພັດທະນາທີ່ຍືນຍົງ.





# ການພັດທະນາຄົນຕາມແນວຄວາມຄິດ ການຮຽນຮູ້ຕະຫຼອດຊີວິດ

*ປ.ອ ລຳພູນ ຫຼວງໄຊ*
ກົມການສຶກສານອກໂຮງຮຽນ

ປ.ອ ລຳພູນ ຫຼວງໄຊ

ຄືຊິບໍ່ມີຄຳນິຍາມຂອງ "ການພັດທະນາ" ໃດທີ່ຈະສົມເໝາະສົມໄປກວ່າຄຳວ່າ: ການພັດທະນາຄືການໃຫ້ໂອກາດຄົນ. ຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມ ຂອງປະເທດລາວເຮົາແຕ່ລະໄລຍະພັກແລະລັດຖະບານຂອງພວກເຮົາກໍ່ໄດ້ຖືເອົາການພັດທະນາຄົນເປັນໃຈກາງບໍ່ວ່າຈະເປັນການພັດທະນາໃນລະດັບບຸກຄົນ, ສັງຄົມ ແລະ ປະເທດຊາດຂອງພວກເຮົາ ແລະ ໄດ້ຖືເອົາວຽກງານການພັດທະນາຄົນ ໃຫ້ມີຄວາມຮູ້ເປັນວຽກງານທີ່ສຳຄັນກວ່າວຽກງານອື່ນໆກ່ອນບາດກ້າວໜຶ່ງ ຫຼື ເວົ້າອີກຢ່າງໜຶ່ງກໍ່ຄື: ຖືເອົາຄຸນນະພາບຄວາມຮູ້ຄວາມສາມາດຂອງຄົນເປັນອັນ ຕັດສິນການພັດທະນາ.

## "ເງິນເຕັມພາບໍ່ທໍ່ພະທາຍາເຕັມປູມ"

ທັດສະນະນີ້ບໍ່ແມ່ນເກີດຂຶ້ນແລະຢັ້ງຢືນຈາກປະສົບການຕົວຈິງຂອງສັງຄົມໃນໂລກປະຈຸບັນເທົ່ານັ້ນ ແຕ່ມີມາຕັ້ງແຕ່ສະໄໝດຶກດຳບັນຂອງບັນພະບູລຸດລາວເຮົາ ດັ່ງຄຳບູຮານທີ່ໄດ້ກ່າວເຕືອນແລະສັ່ງສອນເອົາໄວ້ວ່າ: 'ເງິນເຕັມພາບໍ່ທໍ່ພະທາຍາເຕັມປູມ' ເຊິ່ງສາມາດອະທິບາຍຄວາມໝາຍວ່າ ເງິນຄຳນັ້ນເຖິງແມ່ນວ່າຈະມີມາກຫຼາຍຄືດັ່ງອາຫານເຕັມພາເຂົ້າແລະກິນໃຫ້ອີ່ມປານໃດກະບໍ່ມີຄວາມສຳຄັນເທົ່າກັບການທີ່ຄົນເຮົາມີຄວາມຮູ້ຢູ່ໃນຕົນໂຕຂອງເຮົາ. ໝາຍວ່າ ຖ້າຄົນເຮົາຫາກຮູ້ແຕ່ໃຊ້ຈ່າຍເງິນຄຳທີ່ມີໂດຍບໍ່ມີຄວາມຮູ້ທີ່ຈະເຮັດໃຫ້ເງິນຄຳທີ່ມີນັ້ນເປັນຕົ້ນທຶນເພື່ອ ເພີ້ມຈຳນວນເງິນໃຫ້ຫຼາຍຂຶ້ນໄປຕະຫຼອດຈຳນວນທີ່ມີນັ້ນມັນກໍ່ຈະຫຼຸດໜ້ອຍຖອຍລົງຈົນໃນທີ່ສຸດກໍ່ຈະໝົດສິ້ນໄປບໍ່ມື້ໃດກໍ່ມື້ໜຶ່ງ, ແຕ່ກົງກັນຂ້າມ ຖ້າຄົນເຮົາມີຄວາມຮູ້ຢູ່ໃນໂຕແລ້ວ ເຖິງວ່າຈະບໍ່ມີເງິນເປັນຕົ້ນທຶນກໍ່ຕາມ ຄົນກໍ່ສາມາດທີ່ຈະຫາເງິນໄດ້ດ້ວຍການນຳໃຊ້ຄວາມຮູ້ຂອງຕົນເປັນຕົ້ນທຶນ ຫຼື ເວົ້າສັ້ນໆກໍ່ຄື: ເງິນຄຳເປັນວັດຖຸກທີ່ສາມາດໝົດສິ້ນໄປ ແຕ່ຄວາມຮູ້ເປັນຊັບສິນອັນປະເສີດທີ່ຢູ່ນຳເຮົາໄປຕະຫຼອດ. ສະນັ້ນ, ຄວາມ ຈະເລີນຮຸ່ງມີຂອງບຸກຄົນ ແລະ ສັງຄົມຈຶ່ງເຫັນໄດ້ຈາກ ຄວາມແຕກຕ່າງກັນທາງດ້ານລະດັບຄວາມຮູ້ຄວາມສາມາດ ເຊິ່ງພວກເຮົາສາມາດເວົ້າໄດ້ວ່າ: ຄົນມີຄວາມຮູ້ຫຼາຍແລະຄວາມຮູ້ສູງກໍ່ຈະສາມາດເລືອກວຽກເຮັດງານທຳທີ່ຕົນເອງຕ້ອງການແລະໃຫ້ຜົນປະໂຫຍດ ຕອບແທນສູງກວ່າຜູ້ທີ່ບໍ່ມີຄວາມຮູ້ ຫຼື ຄວາມຮູ້ຕ່ຳ.

ຢ່າງໃດກໍ່ຕາມ, ຄວາມຮູ້ທີ່ວ່ານີ້ພວກເຮົາຄວນເຂົ້າໃຈວ່າ: ມັນເປັນຄວາມສຳນຶກທີ່ກວ້າງຂວາງ ແລະ ຫຼາກຫຼາຍ ເຊິ່ງບໍ່ໄດ້ຈຳກັດຢູ່ໃນຄວາມສຳນຶກແລະຄວາມເຊື່ອທີ່ຍຶດຕິດຢູ່ນຳແຕ່ຄວາມຮູ້ນຳແຕ່ໃບປະກາສະນິຍະບັດເທົ່ານັ້ນ, ແຕ່ມັນກວມເອົາທຸກໆຄວາມຮູ້ ເຊິ່ງລວມທັງຄວາມຮູ້ທີ່ຄົນເຮົາໄດ້ຈາກການສຶກສາຮ່ຳຮຽນຢູ່ໃນສະຖາບັນການສຶກສາ ແລະ ຄວາມຮູ້ທີ່ຄົນເຮົາສະສົມຈາກປະສົບການດຳລົງຊີວິດຕົວຈິງ. ໃນຄວາມເປັນຈິງແລ້ວ ມີຫຼາຍປະກົດການຂອງສັງຄົມທີ່ສະແດງໃຫ້ເຫັນວ່າ ຄວາມຮູ້ທີ່ໄດ້ມາຈາກປະສົບການຕົວຈິງກໍ່ມີຄວາມສຳຄັນຄືກັນກັບຄວາມຮູ້ທີ່ໄດ້ມາຈາກການຮຽນຢູ່ໃນສະຖາບັນການສຶກສາ. ຍິ່ງໄປກວ່ານີ້, ທັດສະນະຂອງຜູ້ປະຕິບັດຕົວ ຍັງເຫັນວ່າປະສົບການມີຄຸນປະໂຫຍດຫຼາຍກວ່າຄວາມຮູ້ທີ່ນອນຢູ່ໃນໃບປະກາສະນິຍະບັດດ້ວຍຊ້ຳ ດັ່ງທີ່ພວກເຮົາເຄີຍໄດ້ຍິນຄຳພໍ່າເພີຍຂອງສັງຄົມເຮົາມັກເວົ້າວ່າ: 'ສິບຜູ້ຮູ້ບໍ່ທໍ່ຜູ້ເຄີຍ'. ນອກຈາກນີ້, ສັງຄົມລາວເຮົາກໍ່ຍັງສົມທຽບ ຄວາມແຕກຕ່າງຄຸນນະພາບຂອງ ໃບປະກາດສະນິຍະບັດ ຫຼື ຮຽນຈົບການສຶກສາມາຈາກລະດັບສູງໃສ່ ກັບການປະຕິບັດຕົວຈິງຢູ່ໃນຊີວິດປະຈຳວັນວ່າ ໃບປະກາສະນິຍະບັດບໍ່ສາມາດຊ່ວຍເຮັດໃຫ້ທຸກຊີວິດດີຂຶ້ນດັ່ງຄວາມເຊື່ອທີ່ມີຕໍ່ການສຶກສາໃນໂຮງຮຽນ ຕົວຢ່າງສັງຄົມມັກເວົ້າວ່າເຫຍາະເຍີ້ຍຄົນປະເພດດັ່ງກ່າວນີ້ວ່າ: 'ເປັນຄົນທີ່ມີຄວາມຮູ້ຖ້ວມຫົວເອົາຕົວບໍ່ລອດ'. ຄຳເວົ້າດັ່ງກ່າວນີ້ ສະແດງໃຫ້ເຫັນວ່າໃບປະກາດສະນິຍະບັດ ຫຼື ຄວາມຮູ້ທີ່ຮຽນຈາກຫ້ອງຮຽນນັ້ນບໍ່ແມ່ນສິ່ງທີ່ສົມບູນແບບ ແຕ່ສິ່ງສຳຄັນແມ່ນຄວາມຮູ້ໃນການດຳລົງຊີວິດຢູ່ໃນສັງຄົມ ຫຼື 'ໃບປະກາດຊີວິດ' ເຊິ່ງກໍ່ແນ່ນອນວ່າຄືຊິບໍ່ມີສະຖາບັນການສຶກສາໃດທີ່ຈະສາມາດນຳມາບັນຈຸເປັນເນື້ອໃນຫຼັກສູດການຮຽນ-ການສອນ ແລະ ໃຊ້ເວລາພຽງ 17 ປີ (ນັບແຕ່ການສຶກສາຊັ້ນປະຖົມຈົນຈົບມະຫາວິທະຍາໄລ) ມາບອກສອນກັນໃຫ້ຈົນໝົດທຸກຢ່າງໄດ້.

ສິ່ງທີ່ຂ້າພະເຈົ້າກຳລັງເວົ້ານີ້ບໍ່ໄດ້ໝາຍຄວາມວ່າ: ການສຶກສາໃນໂຮງຮຽນບໍ່ມີຜົນປະໂຫຍດ ຫຼື ການຮຽນຮູ້ຢູ່ໃນການດຳລົງຊີວິດຕົວຈິງ (ປະສົມການ) ດີກວ່າຄວາມຮູ້ທີ່ໄດ້ຈາກການສຶກສາຮ່ຳຮຽນຢູ່ໃນຫ້ອງຮຽນ, ແຕ່ຂ້າພະເຈົ້າກຳລັງອະທິບາຍໃຫ້ເຫັນວ່າ ບໍ່ມີຄວາມຮູ້ໃດສົມບູນແບບທີ່ສາມາດນຳໃຊ້ໄດ້ກັບທຸກກໍລະນີ ແລະ ນຳໃຊ້ໄດ້ຕະຫຼອດໄປ. ສະນັ້ນ, ທຸກຄວາມຮູ້ບໍ່ວ່າຈະແມ່ນຄວາມຮູ້ທີ່ໄດ້ຈາກການສຶກສາຮ່ຳຮຽນຢູ່ໃນໂຮງຮຽນ, ນອກໂຮງຮຽນ ຫຼື ຄວາມຮູ້ທີ່ເກີດຈາກການສະສົມປະສົບການຕົວຈິງທີ່ເກີດຂຶ້ນຢູ່ໃນການດຳລົງຊີວິດປະຈຳວັນກໍ່ລ້ວນແລ້ວແຕ່ມີຄວາມສຳຄັນແລະຈຳເປັນເທົ່າທຽມກັນ ແລະ ບໍ່ຄວນເອົາໃຈໃສ່ຊຸກຍູ້ແຕ່ດ້ານໃດດ້ານໜຶ່ງພຽງຢ່າງດຽວ.

ຢ່າງໃດກໍ່ຕາມ, ໃນໄລຍະຜ່ານມາຈົນຮອດປະຈຸບັນນີ້ພວກເຮົາຍັງເຂົ້າໃຈແລະຖືເອົາແຕ່ຄວາມຮູ້ທີ່ໄດ້ຈາກການສຶກສາຮ່ຳຮຽນຢູ່ໃນສະຖາບັນການສຶກສາ (ໃບປະກາດ) ພຽງຢ່າງດຽວ, ຍັງບໍ່ທັນໄດ້ເອົາໃຈໃສ່ຕໍ່ຄວາມສຳຄັນຂອງບັນດາຄວາມຮູ້ຄວາມສາມາດທີ່ຄົນເຮົາສຶກສາຮ່ຳຮຽນໄດ້ດ້ວຍຕົນເອງຈາກການຊອກສະແຫວງຫາຮຽນດ້ວຍຮູບແບບແລະວິທີການຮຽນຈາກແຫຼ່ງການຮຽນຮູ້ຕ່າງໆ.



ການເບິ່ງຂ້າມ ບັນຫາດັ່ງກ່າວນີ້ ບໍ່ພຽງແຕ່ເຮັດໃຫ້ເກີດຄວາມບໍ່ ສະເໝີພາບໃນສັງຄົມ ເຊິ່ງເຮັດໃຫ້ຄົນທີ່ມີຄວາມຮູ້ຄວາມສາມາດ ແຕ່ບໍ່ມີໃບປະກາດຢັ້ງຢືນຈາກສະຖາບັນການສຶກສາກາຍເປັນຄົນ ດ້ອຍ ໂອກາດ ໃນການເລືອກປະກອບອາຊີບ, ແຕ່ຍັງເປັນການບໍ່ສົ່ງເສີມ ໃຫ້ທຸກຄົນໄດ້ພັດທະນາຄວາມຮູ້ທີ່ມີໃຫ້ ເລິກ ແລະສູງຂຶ້ນ ແລະ ທັງເປັນອຸປະສັກໃນການປະກອບສ່ວນຄວາມຮູ້ ຄວາມຊຳນິ ຊຳນານຂອງເຂົາເຈົ້າຢ່າງເຕັມສ່ວນເຂົ້າໃນການສ້າງ ແລະ ພັດທະນາປະເທດຊາດອີກດ້ວຍ.

ແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດຈຶ່ງເປັນແນວຄວາມຄິດທີ່ສະເໜີໃຫ້ພວກເຮົາເບິ່ງຄວາມຮູ້ຄວາມສາມາດຂອງຄົນໃຫ້ກວ້າງ ແລະ ໄກເກີນກວ່າໃບປະກາດທີ່ໄດ້ດ້ວຍການສຶກສາຮ່ຳຮຽນຢູ່ໃນສະຖາບັນການສຶກສາ, ເປັນແນວຄວາມຄິດທີ່ສະເໜີໃຫ້ພວກເຮົາເບິ່ງການສຶກສາເປັນບັນຫາທີ່ຕິດພັນກັບຊີວິດຄົນເຮົານັບຕັ້ງແຕ່ມື້ເກີດຈົນຮອດມື້ສິ້ນສຸດລົມຫາຍໃຈ , ແລະເປັນແນວຄວາມຄິດທີ່ສະເໜີໃຫ້ພວກເຮົາຖືຄວາມສຳຄັນຂອງທຸກຄວາມຮູ້ທີ່ແຕ່ລະຄົນໄດ້ຈາກການສຶກສາຮ່ຳຮຽນດ້ວຍຮູບແບບແລະວິທີການຕ່າງໆມີຄວາມສຳຄັນເທົ່າທຽມກັນ. ນອກຈາກນີ້, ກໍ່ຍັງເປັນແນວຄວາມຄິດທີ່ສະເໜີໃຫ້ພວກເຮົາພິຈາລະນາປັບປຸງແນວຄວາມຄິດຂອງວຽກງານການສຶກສາຄືນໃໝ່ເພື່ອປັບດັດໃຫ້ສາມາດຕອບສະໜອງຄວາມຮູ້ຄວາມສາມາດຕາມຄວາມຕ້ອງການຂອງບຸກຄົນແລະສັງຄົມໃນການນຳໃຊ້ຢູ່ໃນຍຸກທີ່ເສດຖະກິດ-ສັງຄົມ ແລະ ເຕັກໂນໂລຊີມີການພັດທະນາແລະປ່ຽນແປງຢ່າງໄວວາ. ສິ່ງຄຳຄັນໄປກວ່ານີ້ແມ່ນແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດໄດ້ຮຽກຮ້ອງໃຫ້ເຫັນຄວາມສຳຄັນຂອງທຸກໆຄວາມຮູ້ເພື່ອນຳມາໃຊ້ໃຫ້ເກີດປະໂຫຍດແກ່ບຸກຄົນແລະສັງຄົມດ້ວຍລະບົບກົນໄກສຳລັບການສົ່ງເສີມແລະສະໜັບສະໜູນເຊັ່ນ: ກົດໝາຍ, ນະໂຍບາຍ ແລະ ລະບຽບການຂອງລັດເພື່ອຊຸກຍູ້ສົ່ງເສີມໃຫ້ບຸກຄົນໄດ້ພັດທະນາແລະນຳໃຊ້ຄວາມຮູ້ຂອງເຂົາເຈົ້າໃຫ້ເກີດຜົນປະໂຫຍດສູງສົ່ງແກ່ໂຕຂອງເຂົາເຈົ້າເອງ ແລະ ສັງຄົມ; ທັງເປັນການສົ່ງເສີມໃຫ້ນິຕິບຸກຄົນ ແລະອົງການຈັດຕັ້ງທາງສັງຄົມເຫັນຄວາມສຳຄັນ, ຮັບຮູ້ ແລະຍອມຮັບບັນດາທັກສະຄວາມຮູ້ຕ່າງໆ .

ປະຈຸບັນນີ້, ສປປ ລາວ ເວົ້າລວມ ເວົ້າສະເພາະກໍ່ແມ່ນກົມການສຶກສານອກໂຮງຮຽນ ກະຊວງສຶກສາທິການແລະກິລາ ໂດຍໄດ້ຮັບການສະໜັບສະໜູນຈາກຄູ່ຮ່ວມພັດທະນາກຳລັງຢູ່ໃນຂະບວນການເຜີຍແຜ່ແລະສ້າງຄວາມເຂົ້າໃຈກ່ຽວກັບແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດ ເພື່ອຊຸກຍູ້ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທາງສັງຄົມຕ່າງໆນັບທັງພາກລັດ, ພາກເອກະຊົນ ແລະ ອົງການຈັດຕັ້ງສາກົນຕ່າງໆທີ່ກຳລັງເຮັດວຽກຢູ່ ສປປ ລາວ ຮ່ວມຈິດຮ່ວມໃຈກັນໝູນໃຊ້ແນວຄວາມຄິດຂອງການຮຽນຮູ້ຕະຫຼອດຊີວິດຢູ່ໃນອົງການຈັດຕັ້ງຂອງຕົນ ແລະ ເປັນເຈົ້າການໃນການຊຸກຍູ້ສົ່ງເສີມ ແລະ ປະກອບສ່ວນຜັນຂະຫຍາຍແນວຄວາມຄິດການຮຽນຮູ້ຕະຫຼອດຊີວິດເພື່ອເປີດໂອກາດໃຫ້ຄົນລາວທຸກຄົນໄດ້ເຂົ້າເຖິງການຮຽນຮູ້ຕະຫຼອດຊີວິດ ແລະສ້າງປະໂຫຍດສູງສຸດແກ່ຄົນລາວແລະສັງຄົມລາວ.

"ສິບຜູ້ຮູ້ບໍ່ທໍ່ຜູ້ເຄີຍ"




# ການຮຽນຮູ້ຕະຫຼອດຊີວິດເປັນສິດທິມະນຸດ - ເລື່ອງເລົ່າສ່ວນໂຕຈາກກຳປູເຈຍ


*ປີ ວັນນາ*

ດີວີວີ ອິນເຕີເນເຊິນແນວ ປະຈຳປະເທດກຳປູເຈຍ


*ຜູ້ອຳນວຍການຫ້ອງການດີວີວີ ອິນເຕີເນເຊິນແນວ ປະຈຳປະເທດກຳປູເຈຍ, ທ່ານ ນາງ ປີ ວັນນາ ໄດ້ແບ່ງປັນປະສົບການ ແລະ ເລື່ອງຂອງລາວເອງກ່ຽວກັບການຮຽນຮູ້ຕະຫຼອດຊີວິດ ໃນຈົດໝາຍຂ່າວສະບັບພິເສດນີ້.*

ລາວໄດ້ເລົ່າວ່າ: “ໃນຂະນະທີ່ຂ້ອຍກຳລັງຮຽນພາສາອັງກິດ, ຂ້ອຍສົນໃຈຢາກລອງໃຊ້ວິທີໃໝ່ທີ່ຂ້ອນຂ້າງແຕກຕ່າງຈາກວິທີທີ່ຂ້ອຍຮຽນພາສາລັດເຊຍ. ໃນປະເທດກຳປູເຈຍໂຮງຮຽນຂອງລັດສ່ວນຫຼາຍແມ່ນຈະສອນ ໄວຍະກອນອັງກິດ ແລະ ທັກສະການອ່ານ ແລະ ສອນສະເພາະແຕ່ນັກຮຽນທີ່ຍັງໜຸ່ມນ້ອຍ. ໃນຕອນທີ່ຂ້ອຍກຳລັງຮຽນໃນລະບົບສາມັນສຶກສານັ້ນ ຂ້ອຍບໍ່ມີໂອກາດໄດ້ຮຽນພາສາອັງກິດ”.

ສະນັ້ນ, ຂ້ອຍຈຶ່ງມີອິດສະຫຼະທີ່ຈະເລືອກວິທີການໃໝ່ໆ ສຳລັບການຮຽນຮູ້ - ການທວນຄືນປະໂຫຍກງ່າຍດາຍ ທີ່ຄົນປະເທດອື່ນມັກໃຊ້ສຳລັບການຮຽນຮູ້ພາສາອື່ນ. ເພື່ອຈະໃຊ້ວິທີນີ້ ຂ້ອຍຕ້ອງໄດ້ຟັງບົດສົນທະນາເປັນພາສາອັງກິດຈາກປຶ້ມແບບຮຽນ ແລະ ຕິດຕາມ ແລະ ທວນຄືນບົດຮຽນໃນປຶ້ມ. ເປັນໂຊກຂອງຂ້ອຍ ໃນບ່ອນທີ່ຂ້ອຍເຮັດວຽກ ຂ້ອຍໄດ້ພົບກັບເພື່ອນຮ່ວມງານຕ່າງຊາດທີ່ສາມາດຊ່ວຍໃຫ້ຂ້ອຍໃຊ້ພາສາອັງກິດໄດ້ຢ່າງຖືກຕ້ອງ ແລະ ຊ່ວຍໃຫ້ຂ້ອຍໄດ້ຝຶກເວົ້າພາສາອັງກິດ. ວິທີນີ້ແມ່ນເປັນປະໂຫຍດຫຼາຍສຳລັບຂ້ອຍທີ່ເປັນຜູ້ເລີ່ມຕົ້ນຮຽນພາສາ ເຊິ່ງຂ້ອຍເອງແມ່ນບໍ່ມີໂອກາດໄດ້ເຂົ້າໄປຮຽນໃນຊັ້ນຮຽນພາສາອັງກິດ. ແຕ່ລະວັນຂ້ອຍໃຊ້ເວລາ 30 ນາທີໃນການຮຽນດ້ວຍຕົນເອງ ແລະ ຕອນໃດທີ່ຂ້ອຍໄດ້ພົບພໍ້ກັບຄົນທີ່ໃຊ້ພາສາອັງກິດ ຂ້ອຍກໍພະຍາຍາມເວົ້າກັບເຂົາເຈົ້າ ຍ້ອນວ່າຂ້ອຍຮູ້ວ່າພວກເຂົາເຈົ້າເຕັມໃຈທີ່ຈະເວົ້າ ແລະ ຊ່ວຍປັງປຸງພາສາອັງກິດຂອງຂ້ອຍ.



ສຳລັບຂ້ອຍແລ້ວ, ຂ້ອຍມັກພົບປັນຫາໃນຕອນເລີ່ມຕົ້ນການອອກສຽງ ແລະ ໄວຍະກອນຂັ້ນພື້ນຖານ ເນື່ອງຈາກວ່າປຶ້ມພາສາອັງກິດໃນກຳປູເຈຍສ່ວນຫຼາຍແມ່ນເນັ້ນການສົນທະນາເປັນຫຼັກ. ຢ່າງໃດກໍຕາມ, ຂ້ອຍກໍສາມາດສ້າງພື້ນຖານການຮຽນພາສາອັງກິດສຳລັບຂ້ອຍເອງໂດຍອາໃສບ່ອນເປັນວຽກເປັນຈຸດເຊື່ອມໂຍງ, ຂ້ອຍຮຽນຂຽນໂດຍການຂຽນອີເມວ, ຮຽນເວົ້າກັບເພື່ອຮ່ວມງານຄົນຕ່າງປະເທດ ແລະ ຮຽນຟັງຈາກເທັບສຽງ.

ໃນສັດຕະວັດນີ້, ເຕັກໂນໂລຊີຊ່ວຍໃຫ້ພວກເຮົາສາມາດຄົ້ນຫາ ແລະ ເຂົ້າເຖິງສິ່ງຕ່າງໆໄດ້ຢ່າງງ່າຍດາຍ ໂດຍສະເພາະຜູ້ທີ່ຕ້ອງການຮຽນພາສາໃໝ່ໆ ຫຼື ສິ່ງໃໝ່ໆ ເພື່ອເປັນການສ້າງໂອກາດ. ສຳລັບພວກເຮົາແລ້ວ ພວກເຮົາພຽງແຕ່ຕ້ອງໃຫ້ຄວາມສຳຄັນ ແລະ ນຳໃຊ້ການຮຽນຮູ້ຕະຫຼອດຊີວິດເຂົ້າໃນການດຳລົງຊີວິດປະຈຳວັນຂອງພວກເຮົາ.

ການຮຽນຮູ້ຕະຫຼອດຊີວິດແມ່ນສິດທິມະນຸດ!



# ສະມາຄົມສົ່ງເສີມການຮຽນຮູ້ຂອງຫວຽດນາມ ໃນນາມຜູ້ສົ່ງເສີມການຮຽນຮູ້ຕະຫຼອດຊີວິດ

*Khau Huu Phuoc*
SEAMEO Regional Centre for Lifelong Learning

## ຄວາມເປັນມາ

ວັນທີ 29 ກຸມພາ ປີ 1996, ສະມາຄົມໄດ້ຖືກກໍ່ຕັ້ງຂຶ້ນໃນປະເທດຫວຽດນາມ ໂດຍມີພາລະກິດໃນການສົ່ງເສີມການຮຽນຮູ້ ແລະ ພອນສະຫວັນ ແລະ ສ້າງສັງຄົມແຫ່ງການຮຽນຮູ້ໃນຫວຽດນາມ.

ບໍ່ວ່າຈະເປັນສູນການຮຽນຮູ້ຊຸມຊົນຂອງທາງການ ຫຼື ຄອບຄົວ ແລະ ກຸ່ມການຮຽນຮູ້ແມ່ນບໍ່ເປັນທີ່ຮູ້ຈັກໃນໄລຍະນັ້ນ ແລະ ກິດຈະກໍາຕ່າງໆ ກ່ຽວກັບການສຶກສາແມ່ນຍັງບໍ່ເປັນທີ່ໜ້າສົນໃຈ.

ໃນ 20 ປີຕໍ່ມາ ການເຄື່ອນໄຫວກ່ຽວກັບການຮຽນຮູ້ແມ່ນໄດ້ແຜ່ກະຈາຍໄປທົ່ວປະເທດ ບໍ່ພຽງແຕ່ກິດຈະກໍາຂອງໂຮງຮຽນເທົ່ານັ້ນ ແຕ່ຍັງແມ່ນສູນການຮຽນຮູ້ຊຸມຊົນທີ່ຫຼາຍກວ່າ 11,000 ສູນ, ທີ່ກວມເອົາກວ່າ 8.4 ລ້ານຄອບຄົວການຮຽນຮູ້, 65,200 ກຸ່ມການຮຽນຮູ້ ແລະ 70,356 ຊຸມຊົນການຮຽນຮູ້ ເຊິ່ງທັງໝົດນັ້ນແມ່ນເປັນວິງລໍ້ການຂັບເຄື່ອນຂອງການພັດທະນາການຮຽນຮູ້ຕະຫຼອດຊີວິດ.

ທັງໝົດນັ້ນແມ່ນຜູ້ທີ່ມີບົດບາດສໍາຄັນໃນຂະບວນການກໍ່ຕັ້ງສະມາຄົມສົ່ງເສີມການຮຽນຮູ້ຕະຫຼອດຊີວິດ ຂອງຫວຽດນາມ (VALP).

VALP ແມ່ນອົງການທາງສັງຄົມທີ່ຈັດຕັ້ງຂຶ້ນເພື່ອຮວບຮວມຊັບພະຍາກອນທາງສັງຄົມທີ່ແຕກຕ່າງກັນ ເພື່ອສົ່ງເສີມການຮຽນຮູ້, ພອນສະຫວັນ ແລະ ການສ້າງສັງຄົມແຫ່ງການຮຽນຮູ້ໃນຫວຽດນາມ. ມີການຈັດລະບົບການຄຸ້ມຄອງບໍລິຫານເປັນລໍາດັບຂັ້ນຈາກສ່ວນກາງໄປຈົນເຖິງທ້ອງຖິ່ນ (ກຸ່ມບ້ານ ແລະ ຊຸມຊົນ) ດ້ວຍເຫດຜົນທັງປວງ, ໃນຕະຫຼອດໄລຍະເວລາ 20 ກວ່າປີ VALP ໄດ້ຮັບການພັດທະນາໃນຫຼາຍລະດັບ ແລະ ໄດ້ມີສາຂາແຈກຢາຍໄປທົ່ວທຸກແຂວງ, ເມືອງ ແລະ ທຸກຊຸມຊົນ.

## ກິດຈະກໍາຫຼັກ ແລະ ຜົນສໍາເລັດ

ໃນປີ 2007 VALP ໄດ້ຖືກມອບໝາຍຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ດໍາເນີນການວິໄຈກ່ຽວກັບຮູບແບບທີ່ເໝາະສົມສໍາລັບສັງຄົມແຫ່ງການຮຽນຮູ້ຂອງຫວຽດນາມ. ບົດລາຍງານຂອງການວິໄຈໄດ້ຮັບການປະເມີນໃນປີ 2009, ເຊິ່ງໃນບົດລາຍງານນີ້ສະແດງໃຫ້ເຫັນວ່າສັງຄົມແຫ່ງການຮຽນຮູ້ຂອງຫວຽດນາມທີ່ຈະຖືກສ້າງຂຶ້ນແມ່ນຄວນຈະເລີ່ມຕົ້ນທີ່ລະດັບພື້ນຖານຂອງຊຸມຊົນ, ກຸ່ມບ້ານ ແລະ ໝູ່ບ້ານໂດຍຜ່ານການພັດທະນາສູນການຮຽນຮູ້ຊຸມຊົນ, ຄອບຄົວນັກຮຽນຮູ້, ກຸ່ມນັກຮຽນຮູ້ ແລະ ຊຸມຊົນໃນໝູ່ບ້ານ. ເຊິ່ງຂໍ້ສະເໜີແນະດັ່ງກ່າວໄດ້ຮັບການອະນຸມັດ ແລະ ເລີ່ມກິດຈະກໍາທົດລອງຂອງໂຄງການ.

ໃນເດືອນທັນວາ ປີ 2015 VALP ໄດ້ນໍາສະເໜີຕົວຊີ້ວັດຂອງຄອບຄົວການຮຽນຮູ້, ກຸ່ມການຮຽນຮູ້, ຊຸມຊົນການຮຽນຮູ້ ແລະ ໜ່ວຍການຮຽນຮູ້ສໍາລັບປີ 2016-2020. ເຊິ່ງຕົວຊີ້ວັດນີ້ແມ່ນບາດກ້າວໜຶ່ງເພື່ອການສົ່ງເສີມການຮຽນຮູ້ຕະຫຼອດຊີວິດໃນປະເທດຫວຽດນາມ.

VALP ສະໜອງການໃຫ້ບໍລິການແກ່ສັງຄົມທີ່ຫຼາກຫຼາຍໂດຍການປະກອບສ່ວນຂອງຜູ້ຮຽນເພື່ອເປັນການຊ່ວຍສະໜັບສະໜູນຄູສອນ, ຈາກການໃຫ້ຄໍາປຶກສາແກ່ສູນຊົນ ໃນການເຜີຍແຜ່ຂ່າວສານສໍາລັບໜັງສືພິມ ແລະ ວາລະສານ. ໃນໜັງສືພິມອອນໄລ "Dan Tri" (ຄົນມີສະຕິປັນຍາ) ເຊິ່ງເປັນທີ່ນິຍົມກັນຢ່າງກວ້າງຂວາງສາມາດເປັນເຄື່ອງມືສໍາຄັນໃນການເຜີຍແຜ່ຄວາມຮູ້. ໂດຍອີງຕາມການຈັດລໍາດັບການເຂົ້າເບິ່ງຂໍ້ມູນອອນໄລ ເວັບໄຊ "Alexa", ແມ່ນຢູ່ໃນລໍາດັບທີ່ 13 ໃນປະເທດຫວຽດນາມ ສໍາລັບປີ 2017, ແລະ ທັງເປັນໜັງສືພິມທີ່ພາຍໃນປະເທດທີ່ຄົນຕິດຕາມອ່ານຫຼາຍທີ່ສຸດເປັນລໍາດັບ 4 (ຮອງຈາກ vnexpress.net, dkn.tv, and 24h.com.vn). ວາລະສານ VALP "ການສອນ ແລະ ການຮຽນຮູ້ວັນນີ້" (ISSN 1859 - 2694) ດ້ວຍຫົວຂໍ້ທີ່ສະເພາະເຈາະຈົງທີ່ໄດ້ສ້າງຊື່ສຽງໃຫ້ທີ່ທີ່ຮູ້ຈັກວ່າເປັນເວທີວິທະຍາສາດ ແລະ ການສຶກສາ.

## ງົບປະມານ

ໃນເດືອນກັນຍາ ປີ 1999, ທ່ານນາຍົກລັດຖະມົນຕີໄດ້ລົງນາມໃນມະຕິ 183/1999/QD-TTg ກ່ຽວກັບການຈັດຕັ້ງກອງທຶນສົ່ງເສີມການຮຽນຮູ້ຂອງຫວຽດນາມ. ກອງທຶນນີ້ໄດ້ມາຈາກ 4 ແຫຼ່ງຄືຄ່າທໍານຽມສະມາຊິກ, ງົບປະມານຂອງລັດຖະບານ, ການບໍລິການ (ໂດຍສະເພາະແມ່ນໂຄງການ) ແລະ ການບໍລິຈາກ (ຈາກບຸກຄົນ ແລະ ພາກທຸລະກິດ).

ໃນປີ 2015, ໄດ້ຮັບທຶນຈາກຫຼາຍພາກສ່ວນລວມແລ້ວກວ່າ 2,000 ຕື້ ດົ່ງ (VND-ສະກຸນເງິນຫວຽດນາມ) ເຊິ່ງເຄີດເປັນສອງເທົ່າຂອງທຶນໃນປີ 2010. ໃນປີດຽວກັນງົບປະມານຈາກພາກລັດໂດຍລວມ


© SEAMEO CELLL

ສໍາລັບ ຂະແໜງການສຶກສາ ແມ່ນ 224,826 ຕື້ VND ຄິດເປັນ 20% ຂອງຄ່າໃຊ້ຈ່າຍ ທັງໝົດຂອງລັດຖະບານ. ຖ້າຈະພິຈາລະນາຈາກກອງທຶນ VALP ຈໍານວນ 2,000 ຕື້ VND, ເຊິ່ງສ່ວນຫຼາຍແມ່ນໄດ້ມາຈາກເງິນບໍລິຈາກ, ສະນັ້ນຈຶ່ງສາມາດເວົ້າໄດ້ວ່າ VALP ປະສົບຄວາມສໍາເລັດໃນການລະດົມທຶນສໍາລັບການສຶກສາ.

## ປັດໄຈທີ່ເຮັດໃຫ້ປະສົບຜົນສໍາເລັດ

VALP ໃນໄລຍະເລີ່ມຕົ້ນມີສະມາຊິກ 100,000 ຄົນ ໄດ້ມີຈໍານວນສະມາຊິກເພີ່ມຂຶ້ນເປັນ 14,557,471 ຄົນ ໃນປີ 2015, ໂດຍໜ່ວຍງານທ້ອງຖິ່ນ ທີ່ມາຈາກຊຸມຊົນ ແລະ ໂຮງຮຽນຕ່າງໆ ໃນປະເທດ ເຊິ່ງຄວາມສໍາເລັດທັງໝົດນີ້ແມ່ນເປັນຜົນມາຈາກ:

- ມະຕິຂອງພັກ ແລະ ລັດຖະບານໃນການສົ່ງເສີມການຮຽນຮູ້
- ການປະສານງານກັນຢ່າງໃກ້ຊິດຕິດແທດຂອງລັດຖະບານຈາກສູນກາງຫາທ້ອງຖິ່ນ
- ການໂຄສະນາ ປຸກລະດົມໃຫ້ຮູ້ເຖິງຜົນດີຂອງການສຶກສາ
- ການເຮັດວຽກຮ່ວມກັນຂອງໜ່ວຍງານພາກລັດ ແລະ ພາກເອກະຊົນ, ທົວໜ່ວຍທຸລະກິດ ແລະ ບຸກຄົນ ໃນການສະໜອງຄວາມຮູ້ໃຫ້ແກ່ປະຊາຊົນ

20 ປີ ການປ່ຽນແປງແນວຄິດສັງຄົມການຮຽນຮູ້ ເພື່ອຫັນປ່ຽນໄປສູ່ຂະບວນການສົ່ງເສີມການຮຽນຮູ້ໃນທົ່ວປະເທດເຊິ່ງຖືວ່າເປັນສິ່ງທີ່ຍາກຫຼາຍ. ເສັ້ນທາງໄປສູ່ຈຸດໝາຍປາຍທາງຍັງອີກຍາວໄກ, ແຕ່ VALP ຈະຍັງເປັນຕົວແທນທີ່ສໍາຄັນໃນການຊ່ວຍຂັບເຄື່ອນຂະບວນການ.

*References*

"9 Thành tựu cơ bản mà Hội Khuyến Học Việt Nam đã đạt được trong 20 năm (1996-2016)" [9 Fundamental Achievements of VALP in 20 years]. Web Sở Giáo dục và Đào tạo tỉnh Điện Biên <http://dienbien.edu.vn/Tin-tuc-tong-hop/HKH-9-thanh-tuu-co-ban-ma-Hoi-Khuyen-hoc-Viet-Nam-da-dat-duoc-trong-20-nam-1996-2016-2094.html>. Accessed 20 October 2017.

Điều lệ Hội Khuyến Học Việt Nam (Sửa đổi, bổ sung 2017) [Regulation of Vietnam Association for Learning Promotion - Revised 2017]. Issued under Decision 151 /QĐ-BNV by the Ministry of Home Affairs. 2017.

Hanoi Open Univeristy. Vietnam National Report. Hanoi: 2016.

Pham, Tat Dong. „20 năm hoạt động khuyến học, khuyến tài xây dựng và phát triển" [20 years of learning promotion, talent nuture - establishment and development]. Web Hội Khuyến Học Việt Nam <http://www.hoikhuyenhoc.vn/modules.php?name=News&op=viewst&sid=4047> Accessed 20 October 2017.

UNESCO Institute for Lifelong Learning. Lifelong Learning in Transformation: Promising Practices in Southeast Asian Countries. Hamburg: 2017.

"Vai trò Hội Khuyến Học trong Hoạt động Trung Tâm Học Tập Cộng Đồng. [Role of VALP in CLC Operations]. Web Hội Khuyến Học Thành Phố Hồ Chí Minh <http://khuyenhochcm.com.vn/index.php/news/Khuyen-hoc-Tp-Ho-Chi-Minh/Vai-tro-cua-Hoi-khuyen-hoc-trong-hoat-dong-Trung-tam-hoc-tap-cong-dong-54/>. Accessed 20 October 2017.

VALP. Quyết định thành lập quỹ khuyến học Việt Nam. 183/1999/QĐ-TTg [Decision 183/1999/QĐ-TTg on the Establishment of the Learning Promotion Fund ]. 1999.

---. Bộ tiêu chí đánh giá, công nhận các Danh hiệu "Gia đình học tập", "Dòng họ học tập", "Cộng đồng học tập" cấp thôn/bản/ấp/tổ dân phố hoặc tương đương, "Đơn vị học tập" ở cơ sở thuộc xã quản lý giai đoạn 2016-2020 [Indices of Learning Families, Learning Clans, Learning Communities at commune level and Learning Units under commune control for 2016-2020]. 2015.

# ການຮຽນຮູ້ຕະຫຼອດຊີວິດໃນເກົາຫຼີ

ບົດສຳພາດຂອງທ່ານ ນາງ ສູນິກ ໂຈ, ຜູ້ອຳນວຍການຂອງ Lifelong Learning Voucher System, ສະຖາບັນການຮຽນຮູ້ຕະຫຼອດຊີວິດຂອງສາທາລະນະລັດເກົາຫຼີ (NILE)

*ສຳພາດໂດຍ ຣາຟາເອລາ ເຣສ, ດີວີວີ ອິນເຕີເນເຊິນແນວ*

*Q: ທ່ານຊ່ວຍເລົ່າກ່ຽວກັບທ່ານເອງ ແລະ ອົງກອນຂອງທ່ານ.*

A: ຂ້າພະເຈົ້າຊື່ ສູນິກ ໂຈ ເປັນຜູ້ອຳນວຍການ ຂອງ Lifelong Learning Voucher System ຢູ່ທີ່ NILE ສາທາລະນະລັດເກົາຫຼີ ແລະ ຂ້າພະເຈົ້າເຮັດວຽກດ້ານການຮຽນຮູ້ຕະຫຼອດຊີວິດ ແລະ ການສຶກສາຜູ້ໃຫຍ່ກັບອົງການສາກົນຕ່າງໆ ລວມທັງ ດີວີວີ ອິນເຕີເນເຊິນແນວ.

ສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດແມ່ນສະຖາບັນຂອງລັດທີ່ມີຄວາມຊ່ຽວຊານໃນການວາງແຜນ ແລະ ການຈັດຕັ້ງປະຕິບັດນະໂຍບາຍການສຶກສາຕະຫຼອດຊີວິດ. ໜ້າວຽກແມ່ນເຊື່ອມໂຍງກັບການສຶກສາຕະຫຼອດຊີວິດ ແລະ ນະໂຍບາຍທີ່ກ່ຽວຂ້ອງກັບສະຖາບັນຂອງລັດຖະບານ. ການເຮັດວຽກຂອງພວກເຮົາໃນສະຖາບັນແມ່ນມີຄວາມຫຼາກຫຼາຍ ເລີ່ມຈາກການຊ່ວຍເຫຼືອກ່ຽວກັບການສ້າງນະໂຍບາຍແຫ່ງຊາດກ່ຽວກັບການສຶກສາຕະຫຼອດຊີວິດ, ສະໜັບສະໜູນວຽກງານການຮູ້ໜັງສືຂອງຜູ້ໃຫຍ່, ສະໜັບສະໜູນເມືອງແຫ່ງການຮຽນຮູ້, ຕະຫຼອດເຖິງ K-MOOC ຫຼື ຫຼັກສູດການຮຽນອອນໄລແບບເປີດກວ້າງຂອງເກົາຫຼີ.

*Q: ນະໂຍບາຍການຮຽນຮູ້ຕະຫຼອດຊີວິດຂອງເກົາຫຼີມີລັກສະນະແນວໃດ??*

A: ນະໂຍບາຍການສຶກສາຕະຫຼອດຊີວິດຂອງເກົາຫຼີແມ່ນອີງຕາມຂອບແນວຄວາມຄິດຂອງ 'ລັດຖະບານໃນຂັ້ນສູນກາງ ແລະ ທ້ອງຖິ່ນ ມີໜ້າທີ່ໃນການສົ່ງເສີມການສຶກສາຕະຫຼອດຊີວິດ'. ນິຕິກຳການສຶກສາຕະຫຼອດຊີວິດຂອງເກົາຫຼີກຳນົດໃຫ້ລັດຖະບານໃນຂັ້ນສູນກາງ ແລະ ທ້ອງຖິ່ນກຳນົດນະໂຍບາຍເພື່ອສົ່ງເສີມ ແລະ ຊຸກຍູ້ການສຶກສາຕະຫຼອດຊີວິດ ເພື່ອໃຫ້ປະຊາຊົນທຸກຄົນໄດ້ຮັບໂອກາດໃນການສຶກສາຕະຫຼອດຊີວິດ. ດັ່ງນັ້ນ ສາມາດເວົ້າໄດ້ວ່າລັກສະນະທີ່ໂດດເດັ່ນຂອງ ນະໂຍບາຍການສຶກສາຕະຫຼອດຊີວິດຂອງເກົາຫຼີແມ່ນ "ການສ້າງສະຖາບັນ" ທີ່ສົ່ງເສີມນະໂຍບາຍການສຶກສາຕະຫຼອດຊີວິດໂດຍອີງຕາມນິຕິກຳ ແລະ ແຜນການຂັ້ນພື້ນຖານ. ແນ່ນອນວ່າ ການສ້າງສະຖາບັນບໍ່ໄດ້ນຳໃຊ້ສັດສ່ວນງົບປະມານ ຫຼື ບຸກຄະລາກອນຂອງລັດຖະບານສູນກາງ ຫຼື ທ້ອງຖິ່ນທັງໝົດ. ຢ່າງໃດກໍຕາມ ເຮົາກໍສາມາດເຫັນໄດ້ເຖິງຄວາມພະຍາຍາມໃນສ້າງໃຫ້ມັນມີຄວາມຍືນຍົງ, ເພື່ອຂະຫຍາຍຄວາມຊ່ວຍເຫຼືອທັງທາງກົງ ແລະ ທາງອ້ອມສຳລັບນະໂຍບາຍການສຶກສາຕະຫຼອດຊີວິດໂດຍການເລີ່ມຕົ້ນຈາກພື້ນຖານຂອງສະຖາບັນຂະໜາດນ້ອຍ.

ອີງຕາມພື້ນຖານຂອງສະຖາບັນດັ່ງກ່າວ ພວກເຮົາໄດ້ເອົາໃຈໃສ່ໃນການສ້າງລະບົບ ເພື່ອສົ່ງເສີມນະໂຍບາຍການສຶກສາຕະຫຼອດຊີວິດໃນທົ່ວປະເທດ, ໃນແຕ່ລະພາກ ແລະ ໃນແຕ່ລະເມືອງ. ໃນຂັ້ນສູນກາງພວກເຮົາມີກະຊວງສຶກສາທິການ ແລະ ສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ, ໃນລະດັບທ້ອງຖິ່ນແມ່ນຮັບຜິດຊອບໃນການຈັດຕັ້ງປະຕິບັດການສົ່ງເສີມວຽກງານທີ່ກ່ຽວຂ້ອງກັບການສຶກສາຕະຫຼອດຊີວິດ ໂດຍຜ່ານລັດຖະບານໃນຂັ້ນທ້ອງຖິ່ນ ແລະ ສະຖາບັນໃນທ້ອງຖິ່ນ ລວມທັງສູນການຮຽນຮູ້ຕະຫຼອດຊີວິດໃນແຕ່ລະເມືອງ. ດັ່ງນັ້ນ ການດຳເນີນງານຈຶ່ງມີໂຄງສ້າງເປັນເມືອງແຫ່ງການຮຽນຮູ້ຂອງເກົາຫຼີ ແລະ ສູນການຮຽນຮູ້ໃນທ້ອງຖິ່ນ ແລະ ໄດ້ຮັບງົບປະມານຈາກລັດຖະບານຂັ້ນສູນກາງ ແລະ ລັດຖະບານທ້ອງຖິ່ນທີ່ກ່ຽວຂ້ອງ. ໃນລະດັບພາກທີ່ໄດ້ຮັບງົບປະມານຈາກລັດຖະບານ ເຊິ່ງຄັດເລືອກອີງຕາມການປະເມີນໂດຍລັດຖະບານຂັ້ນສູນກາງ ແລະ ຍັງມີໂຄງການການສຶກສາຕະຫຼອດຊີວິດອື່ນໆອີກທີ່ກຳລັງດຳເນີນງານ.

*Q: ປະສົບການຂອງທ່ານກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍການຮຽນຮູ້ຕະຫຼອດຊີວິດ?*

A: ຊ່ວງເວລາທີ່ປະທັບໃຈທີ່ສຸດຂອງຂ້າພະເຈົ້າ ແມ່ນຕອນທີ່ຂ້າພະເຈົ້າເຮັດວຽກທີ່ສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ເຊິ່ງເປັນພິທີມອບລາງວັນບົດກອນດີເດັ່ນສຳລັບການສຶກສາ ແລະ ການຮູ້ໜັງສືສຳລັບຜູ້ໃຫຍ່. ການສະໜັບສະໜູນການສຶກສາ ແລະ ການຮູ້ໜັງສືສຳລັບຜູ້ໃຫຍ່ເປັນສິ່ງສຳຄັນໃນນະໂຍບາຍການສຶກສາຕະຫຼອດຊີວິດຂອງເກົາຫຼີ. ຈາກການສຶກສາຂອງ ສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ມີຈຳນວນຜູ້ໃຫຍ່ທີ່ຍັງກືກໜັງສືຢູ່ປະມານ 2.6 ລ້ານຄົນ. ດັ່ງນັ້ນສະຖາບັນເພື່ອການຮຽນຮູ້ຕະຫຼອດຊີວິດແຫ່ງຊາດ ພາຍໃຕ້ການຊ່ວຍເຫຼືອ ແລະ ສະໜັບສະໜູນຂອງກະຊວງສຶກສາທິການ ໄດ້ດຳເນີນການສະໜັບສະໜູນແກ່ກຸ່ມຄົນເຫຼົ່ານີ້ໃນການຮຽນຮູ້ໜັງສືໃນຂັ້ນຕົ້ນຢ່າງໜ້ອຍແມ່ນໃຫ້ເຂົາເຈົ້າສາມາດນຳໃຊ້ໃນການດຳລົງຊີວິດໄດ້ຢ່າງປົກປະຕິ.

ໜຶ່ງໃນໜ້າວຽກທີ່ສຳຄັນທີ່ສຸດແມ່ນວຽກງານການສະໜັບສະໜູນການສຶກສາ ແລະ ການຮຽນຮູ້ສຳລັບຜູ້ໃຫຍ່ ໃນການສົ່ງເສີມ ແລະ ປຸກລະດົມໃຫ້ສັງຄົມເຂົ້າໃຈກ່ຽວກັບວຽກງານການສຶກສາ ແລະ ການຮຽນຮູ້ສຳລັບຜູ້ໃຫຍ່. ໃນແຕ່ລະປີຈະມີ 'ພິທີມອບລາງວັນບົດກອນດີເດັ່ນສຳລັບການສຶກສາ ແລະ ການຮູ້ໜັງສືສຳລັບຜູ້ໃຫຍ່'. ນັກຮຽນຂອງໂຄງການ ການສຶກສາ ແລະ ການຮຽນຮູ້ສຳລັບຜູ້ໃຫຍ່ກະກຽມບົດກອນ ແລະ ແຕ້ມຮູບລະບາຍສີ ແລະ ໄດ້ຄັດເລືອກ

ຜົນງານ ທີ່ດີເດັ່ນມາວາງສະແດງ. ໃນປະເທດເກົາຫຼີຈໍານວນຂອງນັກຮຽນໃນໂຄງການ ການສຶກສາ ແລະ ການຮຽນຮູ້ສໍາລັບຜູ້ໃຫຍ່ສ່ວນຫຼາຍແມ່ນ ເພດຍິງ. ໃນແຕ່ລະປີ ຂ້າພະເຈົ້າເຫັນຜູ້ຊະນະລາງວັນແຕ່ງໂຕດ້ວຍຊຸດປະຈໍາຊາດ ເລົ່າເຖິງຄວາມສຸກ ຄວາມປິຕິຍິນດີ ໃນການທີ່ເຂົາເຈົ້າສາມາດອ່ານ ແລະ ຂຽນໜັງສືໄດ້. ຂ້າພະເຈົ້າຮູ້ສຶກໄດ້ເຖິງຄຸນຄ່າ ແລະ ຄວາມຄຸ້ມຄ່າທີ່ ຂ້າພະເຈົ້າໄດ້ສຸມໃສ່ການເຮັດວຽກເພື່ອການສຶກສາຕະຫຼອດຊີວິດ.

ນອກຈາກນີ້ ໃນພິທີມອບລາງວັນ ຂ້າພະເຈົ້າຍັງໄດ້ພົບກັບເພື່ອນຮ່ວມງານທີ່ເຮັດວຽກກ່ຽວກັບນະໂຍບາຍການຮຽນຮູ້ຕະຫຼອດຊີວິດຈາກຕ່າງປະເທດ ແລະ ໄດ້ຮັບການເຊື້ອເຊີນໃຫ້ເລົ່າເຖິງປະສົບການກ່ຽວກັບການພັດທະນາ ນະໂຍບາຍການຮຽນຮູ້ຕະຫຼອດຊີວິດ.

# CONFINTEA – ການສະໜັບສະໜູນລະດັບໂລກສໍາລັບການດໍາເນີນການໃນທ້ອງຖິ່ນ

*ເຮີຣິເບີດ ຮິນເຊີນ*
ອະດີດຜູ້ອໍານວຍການ ດີວີວີ ອິນເຕີເນເຊີນແນວ ປະຈໍາພາກພື້ນ

ກອງປະຊຸມລະດັບສາກົນມີຄວາມສໍາຄັນແນວໃດສໍາລັບການເຮັດວຽກໃນປະເທດ? ສິ່ງທີ່ກ່ຽວຂ້ອງກັບພວກເຮົາແມ່ນ CONFINTEA ເຊິ່ງຫຍໍ້ມາຈາກກອງປະຊຸມລະດັບສາກົນຂອງອຸຍແນດສະໂກ ໃນການພັດທະນາການສຶກສາ, ຝຶກອົບຮົມ ແລະ ການຮຽນຮູ້ໃນຊ່ວງອາຍຸຂອງຜູ້ໃຫຍ່. ກອງປະຊຸມລະດັບສາກົນ CONFINTEA ນໍາເອົາບັນດາຜູ້ຕາງໜ້າຈາກພາກລັດຖະບານ, ປະຊາສັງຄົມ, ມະຫາວິທະຍາໄລ ແລະ ອົງການສາກົນ.

ສໍາລັບບັນດາຜູ້ຊ່ຽວຊານ ແລະ ພາກປະຊາສັງຄົມ, ກອງປະຊຸມດັ່ງກ່າວນີ້ໄດ້ສ້າງໂອກາດໃນການໂນ້ມນ້າວກ່ຽວກັບເນື້ອໃນ ແລະ ແນະນໍາກ່ຽວກັບການອະພິປາຍລະດັບສາກົນໃນວຽກງານການສຶກສາຜູ້ໃຫຍ່ ແລະ ການຮຽນຮູ້ ແລະ ບົດສະຫຼຸບກອງປະຊຸມ. ຫຼັງຈາກນັ້ນແມ່ນຂໍ້ສະເໜີແນະ ແລະ ຄໍາໝັ້ນສັນຍາທີ່ຈະສາມາດນໍາໃຊ້ເຂົ້າໃນວຽກງານການສະໜັບສະໜູນ.

## CONFINTEA ແລະ ສູນການຮຽນຮູ້ຊຸມຊົນ

CONFINTEA ຈັດຂຶ້ນທຸກໆ 12 ປີ. ກອງປະຊຸມຄັ້ງທໍາອິດຈັດຂຶ້ນໃນປີ 1949 ທີ່ ເມືອງ Helsingör ປະເທດ ເດນມາກ ແລະ ຄັ້ງຫຼັງສຸດແມ່ນຢູ່ເມືອງ Belem ປະເທດບຣາຊິນ ໃນປີ 2009. ໃນໄລຍະເວລາລະຫວ່າງກາງນັ້ນ ກໍໄດ້ມີການຈັດກອງປະຊຸມສໍາລັບກະກຽມ ແລະ ກອງປະຊຸມພາຍຫຼັງ ເພື່ອຕິດຕາມ ແລະ ລວມທັງກອງປະຊຸມທົບທວນໃນໄລຍະກາງລະຫວ່າງກອງປະຊຸມຄັ້ງໃໝ່. ເຊິ່ງຄັ້ງລ່າສຸດແມ່ນໄດ້ຈັດຂຶ້ນທີ່ເມືອງ ຊູວອນ (Suwon), ສາທາລະນະລັດເກົາຫຼີ ໃນວັນທີ 25 - 27 ຕຸລາ ປີ 2017.


© www.le.or.kr

ພິທີມອບລາງວັນ ບົດກອນດີເດັ່ນ ສໍາລັບການສຶກສາ ແລະ ການຮູ້ໜັງສື ສໍາລັບຜູ້ໃຫຍ່



ໃນກອງປະຊຸມຄັ້ງກ່ອນທີ່ເມືອງ Belem ປີ 2009 ຜູ້ຕາງໜ້າ ເຂົ້າຮ່ວມຈາກ ສປປ ລາວ ນຳໂດຍ ພະນະທ່ານ ລີຕູ້ ບົວປາວ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາທິການ ແລະກິລາ ແລະທ່ານອຸ່ນເພັງຄຳມັງຮອງຫົວໜ້າກົມການສຶກສານອກໂຮງຮຽນ ແລະ ໃນຄັ້ງນີ້ ທີ່ຈັດຂຶ້ນທີ່ເມືອງ Suwon ຜູ້ຕາງໜ້າເຂົ້າຮ່ວມແມ່ນ ພະນະທ່ານ ຄຳຜາຍ ສີສະຫວັນ ລັດຖະມົນຕີຊ່ວຍວ່າການກະຊວງສຶກສາ ແລະ ກິລາ ແລະ ທ່ານນາງ ພິລານີ ພິດສະໄໝ ຮອງຫົວໜ້າກົມການສຶກສານອກໂຮງຮຽນ. ກອງປະຊຸມຄັ້ງນີ້ສຳຄັນຫຼາຍເນື່ອງຈາກວ່າ ເຮົາສາມາດນຳເອົາປະສົບການໃນລະດັບສາກົນມາສູ່ລະດັບຊາດໄດ້.

ການສຶກສານອກໂຮງຮຽນ ໂດຍສະເພາະສຳລັບຊາວໜຸ່ມ ແລະ ຜູ້ໃຫຍ່ ແມ່ນສ່ວນສຳຄັນໃນການຮຽນຮູ້ຕະຫຼອດຊີວິດ. ນີ້ແມ່ນຄວາມເປັນຈິງສຳລັບ ສປປ ລາວ ແລະປະເທດເພື່ອນບ້ານໃນອາຊີຕາເວັນອອກສ່ຽງໃຕ້. ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງໄດ້ຈັດຕັ້ງປະຕິບັດໂດຍສະຖາບັນໃນລະດັບທ້ອງຖິ່ນ ເຊິ່ງໃນປະຈຸບັນນີ້ຮຽກວ່າສູນການຮຽນຮູ້ຊຸມຊົນ (ສຮຊ).

ລັດຖະບານຄວນສະໜັບສະໜູນ ສຮຊ ໂດຍຜ່ານ ນະໂຍບາຍ, ນິຕິກຳ ແລະງົບປະມານ. ຢ່າງໃດກໍຕາມ ຖ້າເຮົາມາສັງເກດເບິ່ງສະພາບການຕົວຈິງໃນປະຈຸບັນຈະເຫັນໄດ້ຢ່າງຊັດເຈນວ່າມີຫຼາຍຢ່າງສາມາດປະຕິບັດໄດ້ ແລະ ຫຼາຍຢ່າງຄວນຈະປະຕິບັດໃຫ້ສຳເລັດ. ບໍ່ດັ່ງນັ້ນ ຄຳວ່າ "ບໍ່ປະປ່ອຍໃຜໄວ້ທາງຫຼັງ" ເຊິ່ງແມ່ນຄຳຂວັນໃໝ່ໃນລະດັບສາກົນຈະບໍ່ປະກົດເປັນຈິງ.

## ຂອບການດຳເນີນງານ Belem ແລະ ເປົ້າໝາຍການພັດທະນາແບບຍືນຍົງ

ຍົກຕົວຢ່າງ ຈາກກອງປະຊຸມລະດັບສາກົນ CONFINTEA VI. ຂອບການດຳເນີນງານຂອງ Belem (BFA) ໄດ້ກຳນົດໄວ້ຢ່າງຈະແຈ້ງ: "ການຮຽນຮູ້ຕະຫຼອດຊີວິດ 'ນັບແຕ່ມື້ເກີດຈົນຮອດມື້ສິ້ນລົມຫາຍໃຈ' ແມ່ນປັດຊະຍາ, ແມ່ນຂອບແນວຄວາມຄິດ ແລະ ຫຼັກການຂອງທຸກໆຮູບແບບການສຶກສາ ໂດຍອີງຕາມຄຸນຄ່າໂດຍລວມ, ຄວາມເປັນເອກະລາດ, ຄວາມເປັນມະນຸດ ແລະ ຄວາມເປັນປະຊາທິປະໄຕ". ຫຼັງຈາກນັ້ນ, ໃນລາຍລະອຽດ: "ພວກເຮົາຮັບຮູ້ດີວ່າການສຶກສາສຳລັບຜູ້ໃຫຍ່ເປັນອົງປະກອບໜຶ່ງທີ່ສຳຄັນໃນຂະບວນການຮຽນຮູ້ຕະຫຼອດຊີວິດເຊິ່ງກວມເອົາຄວາມຕໍ່ເນື່ອງໃນການຮຽນຮູ້ເລີ່ມແຕ່ ສາມັນສຶກສາ ເຖິງ ການສຶກສານອກໂຮງຮຽນ ແລະ ການສຶກສາຕາມອັດທະຍາໄສ". ແລະ ສຳລັບ ສຮຊ ຈະຮຽກວ່າ "ພື້ນທີ່ ແລະ ສູນສ້າງການຮຽນຮູ້ ທີ່ຫຼາກຫຼາຍ".

17 ເປົ້າໝາຍ ຂອງການພັດທະນາແບບຍືນຍົງ ໄດ້ຕົກລົງເຫັນດີໂດຍອົງການສະຫະປະຊາຊາດໃນປີ 2015 ເພື່ອໃຫ້ກວມໄປເຖິງ ປີ 2030. ເປັນຂະບວນການຕິດຕາມຜົນຂອງສອງຂະບວນການ ທັງການສຶກສາເພື່ອທຸກຄົນ ແລະ ສະຫັດສະວັດແຫ່ງການພັດທະນາ ເຊິ່ງມີຄວາມສຳຄັນສຳລັບ ສປປ ລາວ. ໃນດ້ານການສະໜັບສະໜູນພວກເຮົາຍັງບໍ່ສາມາດເຮັດໄດ້ດີເທົ່າທີ່ຄວນ ເນື່ອງຈາກວ່າວຽກງານການສຶກສານອກໂຮງຮຽນ ແລະການສຶກສາຜູ້ໃຫຍ່ຍັງມີຂໍ້ຈຳກັດໃນການຈັດຕັ້ງປະຕິບັດ. ເຮົາຍັງເຄີຍຍົກປະເດັນກ່ຽວກັບການສຶກສາເພື່ອທຸກຄົນໃນອີກໜຶ່ງຄວາມໝາຍວ່າ: "ຍົກເວັ້ນຜູ້ໃຫຍ່." ເຊິ່ງມັນບໍ່ເປັນທີ່ຍອມຮັບສຳລັບພວກເຮົາ.

ພວກເຮົາສະໜັບສະໜູນຊາວໜຸ່ມ ແລະ ຜູ້ໃຫຍ່ ໃນຂະບວນການພາຍຫຼັງສິ້ນສຸດການສຶກສາເພື່ອທຸກຄົນ ໃນ ປີ 2015 ແລະ ໂດຍສະເພາະແມ່ນການກ້າວໄປສູ່ການຮຽນຮູ້ຕະຫຼອດຊີວິດ ແລະ ອີກຫຼາຍໆໂຄງການທີ່ໄດ້ສຳເລັດແລ້ວ. ເປົ້າໝາຍການສຶກສາໂດຍລວມແມ່ນສອດຄ່ອງກັບແນວຄວາມຄິດຂອງພວກເຮົາ: "ຮັບປະກັນການສຶກສາໃຫ້ມີຄຸນນະພາບ, ເທົ່າທຽມກັນ ແລະ ທົ່ວເຖິງ ແລະ ສົ່ງເສີມກາລະໂອກາດໃນການຮຽນຮູ້ຕະຫຼອດຊີວິດສຳລັບໝົດທຸກຄົນ". ແລະ ໃນສ່ວນທີ່ກ່ຽວຂ້ອງກັບ ສຮຊ ໄດ້ກຳນົດ: "ສ້າງພື້ນທີ່ສຳລັບການຮຽນຮູ້ ແລະ ສະພາບແວດລ້ອມສຳລັບການສຶກສານອກໂຮງຮຽນ ແລະການຮຽນຮູ້ຂອງຜູ້ໃຫຍ່, ລວມທັງການສ້າງເຄືອຂ່າຍ ສຮຊ ແລະ ການຈັດຫາແຫຼ່ງຂໍ້ມູນ ທີ່ສາມາດເຂົ້າເຖິງດ້ວຍອິນເຕີເນັດ ເຊິ່ງເປັນອົງປະກອບທີ່ສຳຄັນໃນວຽກງານການຮຽນຮູ້ຕະຫຼອດຊີວິດ".

## ກອງປະຊຸມກາງພາກ CONFINTEA ທີ່ເມືອງ Suwon

ໃນກອງປະຊຸມດັ່ງກ່າວມີຜູ້ເຂົ້າຮ່ວມ 410 ຄົນ ຈາກ 103 ປະເທດ ເຊິ່ງເປັນກອງປະຊຸມວິຊາການ ເພື່ອທົບທວນຄືນສິ່ງທີ່ປະຕິບັດໄດ້ສຳເລັດ ຕັ້ງແຕ່ ປີ 2009. ສາທາລະນະລັດເກົາຫຼີເປັນເຈົ້າພາບທີ່ດີຫຼາຍ ພວກເຮົາທຸກຄົນມີຄວາມປະທັບໃຈ. ວາລະກອງປະຊຸມແມ່ນອຸດົມສົມບູນບົດນຳສະເໜີ ແລະ ກອງປະຊຸມຕ່າງໆ. ພວກເຂົາເຈົ້າໃຫ້ຄວາມສຳຄັນໃນການທົບທວນວຽກງານໃນລະດັບພາກພື້ນ, ແນວທາງໃນການປັບປຸງ, ທັດສະນະຕໍ່ກັບເປົ້າໝາຍການພັດທະນາແບບຍືນຍົງເຊັ່ນດຽວກັນກັບການຕິດຕາມ ແລະ ປະເມີນຜົນໃນລະດັບປະເທດ ແລະ ສາກົນ.

ບົດລາຍງານຂອງກອງປະຊຸມແມ່ນກຳລັງຢູ່ໃນຂັ້ນຕອນການກະກຽມ. ເຊິ່ງຈະກວມເອົາທັງບົດນຳສະເໜີ ແລະ ການແລກປ່ຽນສົນທະນາໃນຮູບແບບຫຍໍ້. ສິ່ງສຳຄັນໃນນີ້ແມ່ນຄຳຖາມກ່ຽວກັບການກຳນົດເປົ້າໝາຍ, ຄາດໝາຍ ແລະ ຕົວຊີ້ວັດຂອງກອງປະຊຸມມາຮວມເຂົ້າກັນ ຄື BFA ຂອງ CONFINTEA ແລະ ເປົ້າໝາຍທີ 4 ຂອງການພັດທະນາແບບຍືນຍົງ ວາລະການສຶກສາ 2030.

ຂ້າພະເຈົ້າເປັນສະມາຊິກໃນການກະກຽມຮ່າງບົດລາຍງານຜົນໄດ້ຮັບ. ໃນຄວາມເປັນຈິງແລ້ວ, ພວກເຮົາ 5 ຄົນໃນກຸ່ມແມ່ນໄດ້ເຮັດວຽກກ່ຽວກັບ BFA ມາກ່ອນແລ້ວ. ບົດລາຍງານສະບັບຮ່າງໄດ້ຖືກນຳສະເໜີໃນວາລະສຸດທ້າຍຂອງກອງປະຊຸມ ແລະໄດ້ຮັບການຍອມຮັບຢ່າງກວ້າງຂວາງຈາກຫ້ອງປະຊຸມ. ໃນຂະນະດຽວກັນ ກໍຍັງມີຂໍ້ສະເໜີແນະຈຳນວນໜຶ່ງ ເພື່ອນຳໄປປັບປຸງ ເຊິ່ງຈະຢູ່ໃນສະບັບສົມບູນຂອງບົດລາຍງານ.

ບົດລາຍງານ ແລະ ຖະແຫຼງການ ລວມທັງລາຍລະອຽດອື່ນໆເຊັ່ນບົດລາຍງານພາກພື້ນ ຈະຖືກເຜີຍແຜ່ ທີ່ເວັບໄຊ www.uil.unesco.org.

## ສິ່ງທີ່ໜ້າສົນໃຈ

ເວັບໄຊສຳຄັນໃນພາກພື້ນ

www.aspbae.org
www.pria.org
www.seameocelll.org

## ສິ່ງພິມທີ່ໜ້າສົນໃຈ

Adult Education and Development
AED 84: Inclusion and Diversity
AED 83: Skills and Competencies
AED 82: Global Citizenship Education
AED 81: Communities

## ທັດສະນະນາໆຊາດ ໃນວຽກງານການສຶກສາຜູ້ໃຫຍ່

IPE 78: Adult education centres as a key to development - challenges and success factors
IPE 76: Refugees: A challenge for adult education
IPE 75: Agenda - 2030 - Education and Lifelong Learning in the Sustainable Development Goals
IPE 74: 21th Century Mass Graves - Proceeding of the International Conference Tbilisi, Georgia

## ຈົດໝາຍຂ່າວ ໃນພາກພື້ນ

The ASPBAE Bulletin access via www.aspbae.org
NEXUS - access via www.uil.unesco.org
Voice Rising - access via www.icae2.org
Education Policy Matters - via www.unescobkk.org

## ສິ່ງພິມໃໝ່

DVV International Impact Report 2009-2015
Sharing for Learning in Lao PDR: DVV International Engaged in Lifelong Learning for Sustainable Development in Asia Pacific


ຈັດພິມໂດຍ ດີວີວີ ອິນເຕີເນເຊິນແນວ
ຮ່ວມກັບຄູ່ຮ່ວມພັດທະນາໃນ ສປປ ລາວ, ກຳປູເຈຍ ແລະ
ໃນອາຊີໃຕ້ ແລະ ອາຊີຕາເວັນອອກສ່ຽງໃຕ້

ກອງບັນນາທິການ: ປ.ອ. ກ້າ ສະເຫຼີມສຸກ, ພິລານີ ພິດສະໄໝ,
ອຸ່ນເພັງ ຄຳມັງ, ຂັນທອງ ອິນທະຈັກ
ທີມງານບັນນາທິການ: ດາລຸນີ ສີສຸລາດ, ຣາຟາເອລາ ເຣສ,
ດອກຄຳ ຊົມສີຫາປັນຍາ, ສົມໃຈ ແກ້ວເມກ,
ສຸກສະບາຍ ແກ້ວເມືອງເໜືອ
ບັນນາທິການ: ອູເວີ ກາກເຕີນສະແລເກີ



ດີວີວີ ອິນເຕີເນເຊິນແນວ
ຫ້ອງການປະຈຳພາກພື້ນອາຊີ
ຕາເວັນອອກສ່ຽງໃຕ້
351/19 ຖະໜົນວັດນາກໃຫຍ່, ບ້ານທ່າພະລານໄຊ
ເມືອງສີສັດຕະນາກ
ຕູ້ ປ.ນ. 1215, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ.: +856 21 315832-3
ແຟັກ: +856 21 312511
info@dvv-international.la
www.dvv-international.la


**Education for Everyone. Worldwide. Lifelong.**